ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບວັດທະນະຖາວອນ

--===xxxx000000xxxx===--

ອົງການກາແດງລາວ

ໂທ: 021 216610

ແຟັກ : 856 21-252874

ເລກທີ່ 083/ກດລ

ນະຄອນຫລວງວຽງຈັນ,ວັນທີ ໒໒ /01 /2015

# ວິໄສທັດຮອດປີ 2030

## ແລະ ແຜນຍຸດທະສາດພັດທະນາວຽກງານກາແດງລາວ ສໍາລັບ 10 ປີ (2016-2025)

ອີງຕາມຜົນການຈັດຕັ້ງປະຕິບັດແຜນພັດທະນາວຽກງານກາແດງລາວສໍາລັບ 15 ປີ(2001-2015)ທີ່ຜ່ານມາ ອົງການກາແດງລາວແລະກາແດງທ້ອງຖິ່ນສາມາດສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານແຕ່ລະດ້ານແລະ ກໍານົດວິໄສທັດຮອດປີ 2030 ແລະ ແຜນຍຸດທະສາດພັດທະນາສໍາລັບ 10 ປີ (2016-2025) ດັ່ງນີ້:

## ພາກທີ I

## ຕີລາຄາສະພາບການພັດທະນາວຽກງານກາແດງລາວ ໄລຍະ 15 ປີ (2001-2015)

1. ທົບທວນຄືນ ແນວທາງແຜນນະໂຍບາຍ, ທິດນໍາ ແລະ ຍຸດທະສາດ ການພັດທະນາວຽກງານກາແດງລາວໃນ ໄລຍະຜ່ານມາ :

1.1. <u>ສະພາບພາຍນອກ:</u>

ຕະຫລອດໄລຍະ 15 ປີທີ່ຜ່ານມາຍັງມີສິ່ງທ້າທາຍແລະຄວາມຫຍຸ້ງຍາກຫຼາຍດ້ານໂດຍສະເພາະທາງດ້ານໄພທໍາມະຊາດທີ່ນັບມື້ນັບຖີ່ ແລະ ມີຄວາມຮຸນແຮງຫຼາຍຂຶ້ນ, ນອກຈາກນັ້ນ ບັນຫາພະຍາດຕ່າງໆ ກໍ່ມີການລະບາດຂຶ້ນຢ່າງຕໍ່ເນື່ອງ ເຊິ່ງໄດ້ສ້າງຄວາມເສຍຫາຍຕໍ່ຊີວິດແລະ ຊັບສິນຢ່າງມະຫາສານຕໍ່ບັນດາປະເທດໃນພາກພື້ນ ແລະ ໃນໂລກ ແລະ ໄດ້ສົ່ງຜົນກະທົບໃນລະດັບໃດໜຶ່ງຕໍ່ເສດຖະກິດ-ສັງຄົມຂອງປະເທດເຫຼົ່ານັ້ນ.

1.2. <u>ສະພາບພາຍໃນ:</u>

ສະພາບທົ່ວໄປພາຍໃນປະເທດຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ,ມີຄວາມສະຫງົບ,ປອດໄພ, ຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມໜັກແໜ້ນເຊິ່ງເປັນປັດໄຈທີ່ສໍາຄັນທີ່ອໍານວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ,ສ້າງຄວາມເຊື່ອໝັ້ນຈາກເພື່ອນມິດ ແລະ ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ.

ໃນ 15 ປີ ຜ່ານມາປະເທດຂອງພວກເຮົາກໍ່ໄດ້ປະສົບກັບໄພທຳມະຊາດທີ່ມີຄວາມຮຸນແຮງເກີດຂຶ້ນເລື້ອຍໆ ເປັນຕົ້ນແມ່ນລົມພາຍຸ, ໄພນ້ຳຖ້ວມ, ດິນເຊາະເຈື່ອນ, ໄພແຫ້ງແລ້ງ ແລະ ອັກຄີໄພ, ນອກຈາກນັ້ນ ຍັງມີການລະບາດຂອງພະຍາດຕ່າງໆ ແລະ ພະຍາດຕາມລະດູການ ລວມທັງອຸບັດຕິເຫດທາງຖະໜົນ ເຊິ່ງໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນຢ່າງຫຼວງຫຼາຍ.

ເພື່ອປະຕິບັດພາລະບົດບາດທາງດ້ານມະນຸດສະທຳ ອົງການກາແດງລາວ ໄດ້ເອົາໃຈໃສ່ຫ້າງຫາກະກຽມຕອບໂຕ້ໄພພິບັດໃຫ້ການຊ່ວຍເຫຼືອເບື້ອງຕົ້ນຢ່າງທັນການ, ປະກອບສ່ວນໃນການປ້ອງກັນພະຍາດ ແລະ ສົ່ງເສີມສຸຂະພາບ, ເປັນເຈົ້າການໃນການຈັດຫາເລືອດທີ່ພຽງພໍ ແລະ ປອດໄພໃນຂອບເຂດທົ່ວປະເທດ.

## 2. ຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານໃນໄລຍະ 15 ປີຜ່ານມາ

ການຈັດຕັ້ງປະຕິບັດແຜນພັດທະນາວຽກງານງກາແດງລາວໃນໄລຍະຜ່ານມາ ເຖິງວ່າພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍປະການກໍ່ຕາມ, ແຕ່ດວ້ຍຄວາມສາມັກຄີອັນເປັນປືກແຜນແໜ້ນໜາ ແລະ ຄວາມບຸກບືນສູ້ຊົນຂອງທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ດວ້ຍຈິດໃຈແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ທີ່ພາຍໃຕ້ການນຳພາຂອງພັກ ແລະ ລັດໃນທຸກຂັ້ນ ,ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ VII,VIII,IX ຂອງພັກ ໂດຍສະເພາະແມ່ນການປະຕິບັດແຜນການ 4 ບຸກທະລຸທີ່ໄດ້ກຳນົດໄວ້ໃນກອງປະຊຸມໃຫຍ່ ແລະ ການປະຕິບັດວຽກງານສາມສ້າງທີ່ອົງການກາແດງລາວໄດ້ສືບຕໍ່ຜັນຂະຫຍາຍ ການກຳນົດວິໃສທັດຮອດປີ 2030 ແລະທິດທາງແຜນຍຸດທະສາດ 10 ປີ(2016 - 2025) ທີ່ເປັນເປົ້າໝາຍລວມຂອງສະຫະສະວັດແຫ່ງການພັດທະນາຂອງ ສປປ ລາວ ທີ່ເວົ້າວ່າ "ທຸກຂົງເຂດວຽກງານຫຼັກ ແມ່ນແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການ ທາງດ້ານຜົນປະໂຫຍດສູງສຸດຂອງຜູ້ດ້ອຍໂອກາດ" ອົງການກາແດງຈິ່ງໄດ້ກຳນົດເອົາບັນດາ 4 ຂົງເຂດວຽກງານຫຼັກ:

1. ການຄຸ້ມຄອງໄພພິບັດແລະຊ່ວຍເຫຼືອບັນເທົາທຸກ
2. ການສົ່ງເສີມສຸຂະພາບຊຸມຊົນ ແລະ ການບໍລິການເລືອດທີ່ປອດໄພ.
3. ການສົ່ງເສີມຫຼັກການ ແລະ ຄຸນຄ່າມະນຸດສະທຳ.
4. ການພັດທະນາ ແລະ ສ້າງອົງການກາແດງລາວໃຫ້ມີການຈັດຕັ້ງ ແລະ ເຄື່ອນໄຫວໄດ້ຢ່າງເຂັ້ມແຂງ.

ອົງການກາແດງລາວໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕາມພາລະບົດບາດຂອງຕົນຢ່າງມີປະສິດທິຜົນສູງເຂົ້າໃນວຽກງານຕົວຈິງ,ເຊິ່ງຜົນສຳເລັດທີ່ພົ້ນເດັ່ນໃນແຕ່ລະດ້ານ ສາມາດສັງລວມໄດ້ຄືດັ່ງນີ້:

### 2.1. ວຽກງານການຈັດຕັ້ງ-ການເມືອງແນວຄິດ:

ໂຄງປະກອບການຈັດຕັ້ງ ນັບແຕ່ສູນກາງລົງຮອດທ້ອງຖິ່ນປະກອບມີ:

- ອົງການກາແດງລາວປະກອບມີ 01 ຫ້ອງການ,03 ກອງ ແລະ 01 ສູນ (ຫ້ອງການອົງການກາແດງລາວ,ກອງຊ່ວຍເຫຼືອບັນເທົາທຸກ,ກອງສົ່ງເສີມສຸຂະພາບຊຸມຊົນ,ກອງໂຄສະນາແລະຂົນຂວາຍການກຸສົນແລະສູນເລືອດແຫ່ງຊາດ)

- ອົງການກາແດງແຂວງ, ນະຄອນຫຼວງ, ມີ 18 ແຫ່ງໃນທົ່ວປະເທດ ເຊິ່ງປະກອບດ້ວຍ 05 ຂະແໜງການຕ່າງໆ (ຂະແໜງຈັດຕັ້ງແລະບໍລິຫານ-ແຜນການ-ການເງິນ;ຂະແໜງຊ່ວຍເຫຼືອບັນເທົາທຸກ;ຂະແໜງສົ່ງເສີມສຸຂະພາບຊຸມຊົນ; ຂະແໜງໂຄສະນາແລະຂົນຂວາຍການກຸສົນ; ສູນເລືອດແຂວງ)
- ອົງການກາແດງເມືອງ,ເທດສະບານ ປະກອບດ້ວຍ 03 ໜ່ວຍງານ(ໜ່ວຍງານຈັດຕັ້ງແລະບໍລິຫານແຜນການ; ໜ່ວຍງານສົ່ງເສີມສຸຂະພາບຊຸມຊົນແລະເລືອດ; ໜ່ວຍງານໂຄສະນາ-ຂົນຂວາຍການກຸສົນ ແລະ ຊ່ວຍເຫຼືອບັນເທົາທຸກ)

ພະນັກງານອົງການກາແດງລາວທົ່ວປະເທດ

| | |
|---|---|
| - ອົງການກາແດງລາວປະກອບມີພະນັກງານທັງໝົດ: | 413 ຄົນ,ຍິງ 196 ຄົນ. |
| - ພະນັກງານສົມບູນທັງໝົດ: | 326 ຄົນ, ຍິງ 144ຄົນ. |
| - ພະນັກງານຝຶກງານ95 %: | 41 ຄົນ,ຍິງ 31 ຄົນ. |
| - ພະນັກງານຕາມສັນຍາ: | 46 ຄົນ, ຍິງ 23 ຄົນ. |

- ໄດ້ເປີດປັ້ນດຳເນີນຊີວິດການເມືອງໃຫ້ພະນັກງານ,ລັດຖະກອນໃຫ້ມີຄວາມໜັກແໜ້ນ ທາງດ້ານການເມືອງແນວຄິດ, ເຊື່ອໝັ້ນຕໍ່ແນວທາງປ່ຽນແປງໃໝ່, ນະໂຍບາຍການນຳພາຂອງພັກ-ລັດ, ມີແນວຄິດປອດໃສຂາວສະອາດ, ປະຢັດມັດທະຍັດ, ຕໍ່ຕ້ານທຸກກົນອຸບາຍຂອງສັດຕູ ແລະຕ້ານປະກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ.
- ພະນັກງານລັດຖະກອນໄດ້ຮັບການສຶກສາອົບຮົມ, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ-ລັດ, ຈຳນວນໜຶ່ງກໍ່ໄດ້ໄປຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງໄລຍະສັ້ນ ແລະ ໄລຍະກາງ ຢູ່ພາຍໃນປະເທດ.
- ພະນັກງານ-ລັດຖະກອນໄດ້ປະຕິບັດລະບຽບຫຼັກການ, ຂໍ້ກຳນົດ, ຂໍ້ຕົກລົງ, ມະຕິຄຳສັ່ງຕ່າງໆທີ່ພັກ ແລະ ລັດຖະບານວາງອອກຢ່າງເປັນປົກກະຕິບໍ່ວ່າຢູ່ຂັ້ນສູນກາງ ຫຼື ທ້ອງຖິ່ນ.

2.2: <u>ວຽກງານຫ້ອງການ</u>:

ໃນ 15 ປີທີ່ຜ່ານມາໄດ້ປະຕິບັດໜ້າທີ່ຕາມຄວາມຮັບຜິດຊອບຂອງຕົນຢ່າງມີປະສິດທິພາບ ເຊິ່ງມີຜົນງານຫຼາຍດ້ານດັ່ງນີ້:

- ໄດ້ຄົ້ນຄວ້າຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກແລະລັດຖະບານມາເປັນແຜນຍຸດທະສາດໃນການພັດທະນາວຽກງານອົງການກາແດງລາວ, ສ້າງລະບຽບການໃນການຄຸ້ມຄອງບໍລິຫານ,ຄຸ້ມຄອງພາຫະນະ ແລະ ຊັບສິນຂອງລັດ, ລະບຽບການໃນການຄຸ້ມຄອງເອກກະສານ,ການສົ່ງວຽນເອກະສານ,ການເກັບກຳຂໍ້ມູນສັງລວມກິດຈະກຳຕ່າງໆຂອງບັນດາຫ້ອງການ, ກອງ, ສູນ, ຫ້ອງການກາແດງທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ເພື່ອລາຍງານຂັ້ນເທິງ.
- ໄດ້ມີການປັບປຸງບັນດານິຕິກຳ ກ່ຽວກັບການຄຸ້ມຄອງບໍລິຫານ, ວຽກງານຂອງບັນດາກອງ ແລະ ສູນເລືອດແຫ່ງຊາດ ໃຫ້ເປັນລະບົບຄົບຊຸດ ແຕ່ສູນກາງລົງເຖິງທ້ອງຖິ່ນ ເພື່ອໃຫ້ການຄຸ້ມຄອງບໍລິຫານ, ການປະຕິບັດວຽກງານ ໃຫ້ມີ

ປະສິດທິພາບ, ປະສິດທິຜົນດີຂຶ້ນກ່ວາເກົ່າ ແລະ ປະຕິບັດພາລະບົດບາດ, ສິດໜ້າທີ່ເປັນເສນາທິການໃຫ້ການນໍາໃນວຽກງານຕ່າງໆທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

- ໄດ້ຈັດກອງປະຊຸມສະຫຼຸບວຽກງານປະຈໍາເດືອນ,3 ເດືອນ, 6ເດືອນ ແລະ ປະຈໍາປີ ເພື່ອທົບທວນວຽກງານຜ່ານມາແລະ ວາງແຜນພັດທະນາວຽກງານກາແດງໃນຕໍ່ໜ້າ,ໂດຍສະເພາະແມ່ນບັນດາໂຄງການທີ່ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານ, ຄູ່ຮ່ວມພັດທະນາຈາກອົງການຈັດຕັ້ງສາກົນ ທີ່ໃຫ້ການຊ່ວຍເຫຼືອອົງການກາແດງລາວ.

- ໄດ້ຈັດຕັ້ງ, ປະສານສົມທົບ, ເຂົ້າຮ່ວມກອງປະຊຸມດ້ານວິຊາການເພື່ອທົບທວນວຽກງານແລະ ການວາງແຜນພັດທະນາວຽກງານໃນຕໍ່ໜ້າໂດຍສະເພາະແຕ່ລະໂຄງການໄດ້ມີການກວດກາ, ຕິດຕາມ ແລະ ການປະເມີນຜົນບັນດາໂຄງການຕ່າງໆ ຮ່ວມກັບຜູ້ໃຫ້ທຶນຈາກຄູ່ຮ່ວມພັດທະນາທີ່ໃຫ້ການຊ່ວຍເຫຼືອແກ່ອົງການກາແດງລາວ.

- ໄດ້ປະສານງານກັບບັນດາກອງ, ສູນເລືອດແຫ່ງຊາດ ໃນການການສະເຫຼີມສະຫຼອງວັນສໍາຄັນຕ່າງໆຂອງອົງການກາແດງລາວ ແລະ ວັນກາແດງໂລກ.

- ໄດ້ຂຶ້ນແຜນການ ການນໍາໃຊ້ງົບປະມານການລົງທຶນຂອງລັດເຂົ້າໃນຂົງເຂດວຽກງານດ້ານການສົ່ງເສີມວິຊາການ, ການກໍ່ສ້າງພື້ນຖານໂຄງລ່າງຂອງອົງການກາແດງລາວ.

- ໄດ້ມີການກວດກາ ຕິດຕາມ ການປ້ອງກັນສໍານັກງານອົງການ ໃຫ້ມີຄວາມສະຫງົບປອດໄພດີ ແລະ ໄດ້ຈັດຕັ້ງເວນຍາມຫ້ອງການໂດຍສະເພາະໃນວັນສໍາຄັນຕ່າງໆຂອງຊາດ.

- ໄດ້ສະຫຼຸບລາຍຮັບ-ລາຍຈ່າຍງົບປະມານປະຈໍາແຕ່ລະງວດ, ປະຈໍາປີເຊັ່ນລາຍຈ່າຍຮ່ວງງົບປະມານບໍລິຫານແລະ ການລົງທຶນຂອງລັດ, ງົບປະມານການຊ່ວຍເຫຼືອຈາກກາແດງປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນທີ່ໃຫ້ການສະໜັບສະໜູນ.

- ໄດ້ປັບປຸງບູລະນະພາລະບົດບາດການຈັດຕັ້ງແລະການຄຸ້ມຄອງພະນັກງານ-ລັດຖະກອນຂອງອົງການກາແດງລາວໃຫ້ເຂົ້າໃຈ,ເຊື່ອມຊຶມລະບຽບຫຼັກການ, ດໍາລັດ, ຂໍ້ກໍານົດ, ມະຕິຄໍາສັ່ງຕ່າງໆ ໃນການບໍລິຫານຄຸ້ມຄອງເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງໃນແຕ່ລະໄລຍະເປັນຕົ້ນແມ່ນ ການສ້າງແຜນພັດທະນາຊັບພະຍາກອນມະນຸດໄລຍະສັ້ນ,ໄລຍະກາງ ແລະ ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດ, ການປະຕິບັດນະໂຍບາຍ,ການບັນຈຸສັບຊ້ອນພະນັກງານ, ການຍົກຍ້າຍ, ການເຂົ້າຮັບຕໍາແໜ່ງ, ການເຂົ້າຮັບບໍານານ, ບໍານານ, ຍ້ອງຍໍຊົມເຊີຍ, ຈັດຊັ້ນ, ຂັ້ນເງິນເດືອນ, ການປະຕິບັດວິໄນ, ປົດຕໍາແໜ່ງໃຫ້ໄປຕາມລະບຽບການ.

- ໄດ້ຈັດຕັ້ງຄະນະກໍາມະການສົ່ງເສີມຄວາມກ້າວໜ້າແມ່ຍິງ, ວຽກແມ່ ແລະ ເດັກ.

- ສ້າງແຜນຍຸດທະສາດ ແລະ ແຜນການເຄື່ອນໄຫວຂອງພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງແລະ ວຽກແມ່ ແລະ ເດັກ.

- ເຂົ້າຮ່ວມກອງປະຊຸມວິຊາການທີ່ຫ້ອງການເລຂາຄະນະກໍາມາທິການເພື່ອສົ່ງເສີມຄວາມກ້າວໜ້າແມ່ຍິງ ແລະ ວຽກແມ່ ແລະ ເດັກໃນເລື່ອງການສ້າງໂຄງການຄອບຄົວ, ບ້ານ ແລະ ເມືອງພັດທະນາໂດຍຕິດພັນກັບການປະຕິບັດສິດສະເໝີພາບຍິງ-ຊາຍແລະ ປາສະຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ.

- ຈັດກອງປະຊຸມເຜີຍແຜ່ເພື່ອບັນລຸເປົ້າໝາຍສະຫະສະວັດດ້ານການພັດທະນາ, ການປ້ອງກັນແລະຍຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃຫ້ພະນັກງານກາແດງ 18ແຂວງໃນທົ່ວປະເທດ.

- ໄດ້ອວຍພອນໃຫ້ພະນັກງານບໍານານ, ພະນັກງານ, ລັດຖະກອນທີ່ໄດ້ຮັບການປິ່ນປົວຢູ່ໂຮງໝໍ, ເກີດລູກ ແລະ ອື່ນໆ.

- ໄດ້ປະຕິບັດນະໂຍບາຍຕໍ່ສະມາຊິກກອງທຶນຊ່ວຍເຫຼືອເຊິ່ງກັນ ແລະ ກັນເພື່ອກູ້ຢືມເງິນໄປສ້າງເສດຖະກິດຄອບຄົວ ແລະແກ້ໄຂເວລາເຈັບເປັນ.

➢ ໄດ້ປະດັບຫຼຽນໄຊແຮງງານຊັ້ນ III, ຫຼຽນກາແຮງງານ ແລະ ປະທານອົງການກາແດງລາວອອກຂໍ້ຕົກລົງມອບໃບຍ້ອງຍໍ, ໃບອຸປະລະຄຸນ ພາກສ່ວນກົມກອງລວມໝູ່, ບຸກຄົນ ແລະ ຊ່ຽວຊານກາແດງຕ່າງປະເທດທີ່ໄດ້ປະກອບສ່ວນດ້ານວັດຖຸປັດໄຈ, ກໍາລັງແຮງ ເຂົ້າໃນພາລະກິດຊຸກຍູ້ວຽກງານອົງການກາແດງລາວຈໍານວນຫລາຍພັນໃບ.

## 1.3 ວຽກງານຊ່ວຍເຫຼືອບັນເທົາທຸກ:

ວຽກງານຊ່ວຍເຫຼືອບັນເທົາທຸກເປັນວຽກງານໜຶ່ງທີ່ສໍາຄັນຂອງອົງການກາແດງລາວ ເຊິ່ງມີໜ້າທີ່ຫຼັກໃນການໃຫ້ ການຊ່ວຍເຫຼືອເບື້ອງຕົ້ນໃຫ້ແກ່ປະຊາຊົນຜູ້ທີ່ທຸກຍາກຂາດເຂີນ ແລະ ປະສົບໄພພິບັດທາງທໍາມະຊາດ ຫຼື ມະນຸດສ້າງຂຶ້ນ, ໃນໄລຍະ 15 ປີທີ່ຜ່ານມາໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນ ເຊິ່ງມີຜົນງານດັ່ງນີ້:

- ມອບເຂົ້າ, ເຄື່ອງໃຊ້ຄົວເຮືອນ ແລະ ເຄື່ອງນຸ່ງຫົ່ມໃຫ້ແກ່ປະຊາຊົນຜູ້ທີ່ຖືກນໍ້າຖ້ວມ, ລົມພາຍຸ, ດິນເຊາະເຈື່ອນຢູ່ແຂວງວຽງຈັນ, ສາລະວັນ, ຈໍາປາສັກ ແລະ ບ່ອນອື່ນໆທີ່ເກີດເຫດ ໃນຂອບເຂດທົ່ວປະເທດ ເປັນມູນຄ່າຫລາຍຕື້ກີບ.

- ຈັດກອງປະຊຸມແນະນໍາກ່ຽວກັບການຈັດຕັ້ງປະຕິບັດວຽກງານຫຼຸດຜ່ອນຄວາມສ່ຽງໄພພິບັດຊຸມຊົນແລະ ການປະເມີນຜົນໂຄງການພາຍຫຼັງການຈັດຕັ້ງປະຕິບັດສໍາເລັດຢູ່ຫລາຍແຂວງໃນທົ່ວປະເທດ.

- ຝຶກອົບຮົມໃຫ້ອາສາສະໝັກກ່ຽວກັບວຽກງານທ້າງທາກະກຽມ, ປ້ອງກັນແລະ ຄວບຄຸມໄພພິບັດຂັ້ນເມືອງ, ຂັ້ນບ້ານ ໄດ້ຫລາຍພັນຄົນ.

- ລົງແຈກຢາຍເຄື່ອງອຸປະກອນ ທ້າງທາກະກຽມ ແລະ ຕອບໂຕ້ໄພພິບັດ ເຊັ່ນ: ປາກເລັ້, ແອ້ມ, ໄມ, ວິທະຍຸ, ຈັກເຮືອ, ເສື້ອຊູຊີບ, ເຊືອກ, ກົງຢາງ, ໄຟສາຍ, ເກີບໂບກ, ເສື້ອກັນຝົນ ເປັນມູນຄ່າຫລາຍຕື້ກີບໃຫ້ແກ່ບັນດາບ້ານເປົ້າໝາຍຂອງໂຄງການຫຼຸດຜ່ອນຄວາມສ່ຽງໄພພິບັດຊຸມຊົນ.

- ນໍາເອົາເຄື່ອງນຸ່ງຫົ່ມໄປມອບໃຫ້ປະຊາຊົນທີ່ໄດ້ຮັບເຄາະຮ້າຍຈາກອັກຄີໄພ ແລະ ເຫດການອື່ນໆ ທີ່ເກີດຂຶ້ນໃນຂອບເຂດທົ່ວປະເທດ ລວມມູນຄ່າຫລາຍຕື້ກີບ.

- ນໍາເອົາເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ຄົວເຮືອນໄປມອບໃຫ້ອົງການຈັດຕັ້ງທາງສັງຄົມ, ປະຊາຊົນຍົກຍ້າຍຖິ່ນຖານ, ຜູ້ທີ່ປ່ຽວພອຍດ້ອຍໂອກາດໃນຂອບເຂດທົ່ວປະເທດລວມມູນຄ່າຫລາຍຕື້ກີບ.

1.4 ວຽກງານສົ່ງເສີມສຸຂະພາບຊຸມຊົນ

- ອົບຮົມວຽກງານປະຖົມພະຍາບານໃຫ້ສຳນັກງານ,ອົງການ,ບໍລິສັດ,ນັກຂັບຂີ່,ສະຖາບັນຕ່າງໆ, ຊາວໜຸ່ມໃນໂຮງຮຽນ ແລະ ອາສາສະໝັກປະຈຳບ້ານໃນໄລຍະ 15 ປີຜ່ານມາໄດ້ຫລາຍພັນຄັ້ງ ຈຳນວນຜູ້ເຂົ້າຮ່ວມຫລາຍໝື່ນຄົນ.

- ສ້າງຄູຝຶກປະຖົມພະຍາບານໄດ້ຫລາຍພັນຄົນ.

- ຊ່ວຍເຫຼືອຜູ້ປະສົບອຸບັດຕິເຫດຫລາຍຮ້ອຍຄັ້ງ.

- ຝຶກອົບຮົມໃຫ້ອາສາສະໝັກໜ່ວຍລົດຊ່ວຍເຫຼືອຜູ້ປະສົບອຸບັດຕິເຫດທາງຖະໜົນຢູ່ພາຍໃນ ແລະ ຕ່າງປະເທດ.

- ກໍ່ສ້າງນ້ຳລິນໄດ້ຫລາຍຮ້ອຍແຫ່ງຢູ່ແຂວງຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ,ຫົວພັນ,ຊຽງຂວາງ, ວຽງຈັນ ແລະ ແຂວງອື່ນໆໃນຂອບເຂດທົ່ວປະເທດລວມເປັນມູນຄ່າຫລາຍຕື້ກີບ ໃນນັ້ນມີ ທຶນຂອງປະຊາຊົນ, ທຶນຂອງລັດຖະບານ ແລະ ສົມທົບກັບທຶນຂອງກາແດງສາກົນ.

- ກໍ່ສ້າງນ້ຳບາດານ, ນ້ຳປະປາຊຸມຊົນໄດ້ຫລາຍຮ້ອຍແຫ່ງໃນຂອບເຂດທົ່ວປະເທດ.

- ກໍ່ສ້າງວິດຖ່າຍໄດ້ຫລາຍໝື່ນໜ່ວຍທີ່ ແຂວງຜົ້ງສາລີ, ຫຼວງນ້ຳທາ, ບໍ່ແກ້ວ, ຫົວພັນ, ຊຽງຂວາງ, ບໍລິຄຳໄຊ ແລະ ແຂວງອື່ນໆ ລວມເປັນມູນຄ່າຫລາຍຕື້ກີບ.

- ລົງຕິດຕາມສຸຂະສຶກສາຕ້ານພະຍາດຫຼັງນ້ຳຖ້ວມແລະພາຍຫຼັງສຸຂະສຶກສາ.

- ຈັດງານສະຫຼອງວັນຕ້ານເອດສ໌ໂລກໃນແຕ່ລະປີ ມີຜູ້ເຂົ້າຮ່ວມຫລາຍພັນຄົນ.

- ລົງຢ້ຽມຢາມແລະໃຫ້ຄວາມຮູ້ເລື່ອງວັນນະໂລກແກ່ຜູ້ຕິດເຊື້ອເຮສໄອວີ ໃນ 06ແຂວງເປົ້າໝາຍ (ຫຼວງພະບາງ ສາລະວັນ,ຄຳມ່ວນ,ບໍລິຄຳໄຊ, ໄຊຍະບູລີ,ອຸດົມໄຊ ແລະ ແຂວງອື່ນໆໃນຂອບເຂດທົ່ວປະເທດ.

- ສະໜັບສະໜູນຜູ້ຕິດເຊື້ອເຮສໄອວີ/ພະຍາດເອດເຂົ້າເຖິງການບໍລິການເລື່ອງກິນຢາ ARV ແລະສະໜອງອາຫານແຫ້ງໃນບັນດາແຂວງເປົ້າໝາຍ.

- ອົບຮົມໃຫ້ຄວາມຮູ້ກ່ຽວກັບ ເຮສໄອວີ/ພະຍາດເອດສ໌/ພະຍາດຕິດຕໍ່ທາງເພດສຳພັນ, ເຜີຍແຜ່ການຈຳແນກ, ລັງກຽດຜູ້ຕິດເຊື້ອເອດສ໌ ໃຫ້ແກ່ບຸກຄົນທົ່ວໄປໄດ້ຫລາຍຮ້ອຍຄັ້ງ.

1.5 ວຽກງານໂຄສະນາແລະຂົນຂວາຍການກຸສົນ

- ໃນໄລຍະ 15 ປີຜ່ານມາໄດ້ເຜີຍແຜ່ພາລະບົດບາດຂອງອົງການກາແດງລາວ ແລະ ກົດໝາຍມະນຸດສະທຳກາແດງສາກົນຢູ່ບັນດາແຂວງໃນຂອບເຂດທົ່ວປະເທດໄດ້ຫລາຍຮ້ອຍຄັ້ງຄັ້ງ.

- ປະຕິບັດວຽກງານໂຄສະນາຮ່ວມກັບຫ້ອງການ, ກອງ, ສູນເລືອດແຫ່ງຊາດ, ຫ້ອງການກາແດງແຂວງ, ຫ້ອງການກາແດງເມືອງ.

- ຈັດກອງປະຊຸມນັກໂຄສະນາ ແລະ ຂຽນຂ່າວພະນັກງານກາແດງທົ່ວປະເທດ 15 ຄັ້ງ.

- ອອກຂ່າວທາງວິທະຍຸ ແລະ ໂທລະພາບ ກ່ຽວກັບການເຄື່ອນໄຫວກິດຈະກຳຕ່າງໆຂອງອົງການກາແດງລາວ, ອອກຂ່າວໜັງສືພິມທັງພາຍໃນ ແລະ ຕ່າງປະເທດໄດ້ຫລາຍພັນຄັ້ງ.

- ຈັດພິມວາລະສານກາແດງ,ໄດ້ແຈກຢາຍໃຫ້ກາແດງແຂວງ 18 ແຂວງ, ບັນດາກະຊວງ, ໂຮງຮຽນ, ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ.

- ພິມແຜ່ນພັບແລະ ແຈກຢາຍໃຫ້ກາແດງແຂວງໃນທົ່ວປະເທດເປັນພາສາລາວ ແລະ ພາສາອັງກິດໄດ້ຫລາຍໝື່ນແຜ່ນ.

- ຈັດຕັ້ງປະຕິບັດໂຄງການລ້ຽງສັດເພື່ອຊ່ວຍເຫຼືອປະຊາຊົນຜູ້ທີ່ຖືກຜົນກະທົບຈາກລູກລະເບີດບໍ່ທັນແຕກ.

- ນຳສະເໜີໂຄງການນ້ຳ ແລະ ທີ່ຢູ່ອາໄສ ເພື່ອຊ່ວຍເຫຼືອຜູ້ໄດ້ຮັບຜົນກະທົບຈາກລູກລະເບີດບໍ່ທັນແຕກ.

- ຂົນຂວາຍຊອກຫາແຫຼ່ງທຶນແລະລະດົມທຶນຈາກການຈັດງານຫາລາຍໄດ້, ຕັ້ງຫີບບໍລິຈາກ, ຮົມຢາ, ນວດແຜນບູຮານ, ເຊົ່າເຮືອນ ແລະ ລະດົມຈາກພາກສ່ວນຕ່າງໆໃນສັງຄົມ ເພື່ອນຳໃຊ້ເຂົ້າໃນການປະຕິບັດວຽກງານຂອງກາແດງລາວໄດ້ຫລາຍຕື້ກີບ.

- ສົ່ງຈົດໝາຍຂອງຄົນລາວທີ່ຢູ່ເຮືອນຈຳປະເທດໄທໄປຫາຍາດພີ່ນ້ອງຢູ່ລາວຈຳນວນຫລາຍຮ້ອຍສະບັບ ແລະ ສົ່ງໃຫ້ກາແດງແຂວງ.

- ສືບຫາວຫາຍາດພີ່ນ້ອງໄດ້ຫລາຍກໍລະນີ.

- ນຳພາອາສາສະໝັກຊາວໜຸ່ມເຂົ້າຮ່ວມໃນວັນສຳຄັນຕ່າງໆຈຳນວນຫລາຍພັນຄົນ, ຈັດກິດຈະກຳແລກປ່ຽນບົດຮຽນ ລະຫວ່າງອາສາສະໝັກຊາວໜຸ່ມລາວກັບອາສາສະໝັກຊາວໜຸ່ມ ສ ເກົາຫຼີ.

- ສຳເລັດການຂຶ້ນບັນຊີສະຖິຕິຊາວໜຸ່ມກາແດງທົ່ວປະເທດມີທັງໝົດ 3,295 ຄົນ,ຍິງ 1,265 ຄົນ.

## 1.6 ວຽກງານເລືອດ

ເປັນວຽກງານໜຶ່ງທີ່ສຳຄັນຂອງອົງການກາແດງລາວ ແລະ ກໍເປັນສິ່ງທີ່ທ້າທາຍໃນການປຸກລະດົມຂົນຂວາຍຜູ້ສະໝັກໃຈບໍລິຈາກເລືອດ ຍ້ອນຜ່ານມາສັງຄົມຍັງຂາດຄວາມເຂົ້າໃຈຕໍ່ກັບການບໍລິຈາກເລືອດສະນັ້ນ ຈຶ່ງມີຄວາມຈຳເປັນຮຽກຮ້ອງໃຫ້ທຸກພາກສ່ວນໃນສັງຄົມປະກອບສ່ວນໃນການບໍລິຈາກເລືອດແບບສະໝັກໃຈບໍ່ຫວັງສິ່ງຕອບແທນ ແລະ ທີ່ຜ່ານມາ ອົງການກາແດງລາວກໍ່ຄືສູນເລືອດແຫ່ງຊາດ ແລະ ສູນເລືອດທ້ອງຖິ່ນ ໄດ້ເຄື່ອນໄຫວຮັບບໍລິຈາກເລືອດຢ່າງຕໍ່ເນື່ອງລຽນຕິດ ເພື່ອກຽມພ້ອມສະໜອງເລືອດໃຫ້ ສັງຄົມຢ່າງພຽງພໍ ແລະ ປອດໄພ ໃນ 15 ປີທີ່ຜ່ານມາສູນເລືອດແຫ່ງຊາດ ໄດ້ເຄື່ອນໄຫວຕາມກອບນິຕິກຳຂອງລັດ ບັນດາວຽກງານຕາມລາຍລະອຽດດັ່ງລຸ່ມນີ້:

- ຂະຫຍາຍຕາໜ່າງສູນບໍລິຈາກເລືອດກວມເອົາໝົດທຸກແຂວງໃນທົ່ວປະເທດ,ມີອາຄານສູນເລືອດຄົງທີ່ສຳລັບດຳເນີນກິດຈະກຳການບໍລິຈາກເລືອດເຊັ່ນ: ສູນເລືອດແຫ່ງຊາດ,ສູນເລືອດແຂວງຫລວງພະບາງ,ສາລະວັນ,ຄຳມ່ວນ,ໄຊຍະບູລີ,ຫລວງນ້ຳທາ,ເຊກອງ,ບໍ່ແກ້ວ ແລະ ຊຽງຂວາງ.

- ຂະຫຍາຍຕາໜ່າງການບໍລິການເລືອດຂັ້ນໂຮງໝໍໂດຍສ້າງໃຫ້ເປັນໜ່ວຍເກັບຮັກສາເລືອດຢູ່ຕາມໂຮງໝໍໃຫຍ່ໃນນະຄອນຫລວງວຽງຈັນ: ມະໂຫສົດ,ເສດຖາທິລາດ,ມິດຕະພາບ 150 ຕຽງ, ໂຮງໝໍເດັກ ແລະ ໂຮງໝໍບໍລິເວນກອງທັບ : 101,103,106,107,108,109.

- ຂະຫຍາຍຕາໜ່າງການບໍລິການເລືອດໂດຍສ້າງໃຫ້ເປັນໜ່ວຍເກັບຮັກສາເລືອດທີ່ໂຮງໝໍເມືອງໄດ້ 17 ເມືອງຄື : ເມືອງຂວາ,ຊຳໃຕ້,ຄຳ,ຊຽງຮ່ອນ,ຫົງສາ,ນ້ຳບາກ,ປາກລາຍ,ວັງວຽງ,ຊະນະຄາມ,ໄຊສົມບູນ,ຄຳເກີດ,ເຊໂປນ,ສອງຄອນ,ຕະໂອ້ຍ,ຈຳປາສັກ,ໂຂງ ແລະ ດາກຈຶງ.

- ປະກອບອຸບປະກອນວິຊາການພື້ນຖານທີ່ຈຳເປັນໃຫ້ແກ່ບັນດາສູນເລືອດຂັ້ນແຂວງ ແລະ ໜ່ວຍເກັບຮັກສາເລືອດຂັ້ນໂຮງໝໍ,ໂຮງໝໍເມືອງຈຳນວນໜຶ່ງນັບທັງໂຮງໝໍກອງທັບ.

- ອັດຕາສ່ວນຜູ້ບໍລິຈາກເລືອດແບບສະໝັກໃຈບໍ່ຮຽກຮ້ອງສິ່ງຕອບແທນເພີ່ມຂຶ້ນຈາກ 2% ໃນປີ 1995 ມາເປັນ 94% ໃນປີ 2013, ເຊັ່ນດຽວກັບຈຳນວນຖົງເລືອດທີ່ໄດ້ຮັບກໍເພີ່ມຂຶ້ນໃນແຕ່ລະປີ ໝາຍຄວາມວ່າການເຈາະເກັບເລືອດໄດ້ເພີ່ມຂຶ້ນຈາກ 5,000 ຖົງ ໃນປີ 1995 ມາເປັນ 34,377 ຖົງ ໃນປີ 2013, ອັດຕາສ່ວນຜູ້ບໍລິຈາກເລືອດຫລາຍເທື່ອກວມເອົາຫລາຍກ່ວາ 50% ຢູ່ສູນເລືອດແຫ່ງຊາດຊຶ່ງເຄື່ອນໄຫວຮັບບໍລິຈາກເລືອດຢູ່ນະຄອນຫລວງວຽງຈັນ,ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ; ສຳລັບຢູ່ບັນດາແຂວງອື່ນໆແມ່ນປະມານ 25-40% ແລະມີທ່າອ່ຽງເພີ່ມຂຶ້ນເລື້ອຍໆ, ຜູ້ບໍລິຈາກເລືອດແມ່ນໄດ້ຜ່ານການປຸກລະດົມ ແລະ ຜ່ານການກວດຄັດເລືອກຢ່າງມີຫລັກການ.

- ເລືອດທຸກຖົງທີ່ໄດ້ຮັບແມ່ນຜ່ານການກວດວິເຄາະຢ່າງເປັນລະບົບເຊັ່ນ: ການກວດວິເຄາະໝວດເລືອດ,ການກວດທົດລອງເລືອດເຂົ້າກັນ,ການກວດວິເຄາະກັ່ນຕອງພະຍາດນຳສົ່ງທາງເລືອດ.

- ຖົງເລືອດໄດ້ຖືກເກັບຮັກສາໃນສະພາບທີ່ຮັບປະກັນ ແລະ ຖືກແຈກຢາຍໃຫ້ຄົນເຈັບ. ຖົງເລືອດຈຳນວນໜຶ່ງແມ່ນຖືກກະກຽມເປັນສ່ວນປະກອບຂອງເລືອດ ເພື່ອນຳໃຊ້ເຂົ້າໃນການປິ່ນປົວທີ່ຖືກຕ້ອງ ແລະ ເໝາະສົມ.

- ໄດ້ສຳເລັດການສ້າງຄູ່ມື ແລະ ມາດຕະຖານການປະຕິບັດການທາງດ້ານວິຊາການຫລາຍສະບັບ.

- ສາມາດຕອບສະໜອງເລືອດໄດ້ຕາມຄວາມຕ້ອງການໃນລະດັບໜຶ່ງຊຶ່ງໝາຍເຖິງວ່າຫລາຍໆຊີວິດແມ່ນໄດ້ຮັບການຊ່ວຍເຫລືອ.

1.7 <u>ວຽກງານພົວພັນແລະ ຮ່ວມມືສາກົນ</u>

- ຕັ້ງໜ້າປະຕິບັດແນວທາງຕ່າງປະເທດອັນສະເໝີຕົ້ນສະເໝີປາຍຂອງພັກແລະລັດຖະບານ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການພັດທະນາວຽກງານກາແດງລາວໃຫ້ມີຄວາມເຂັ້ມແຂງ ແລະ ສາມາດເຊື່ອມໂຍງເຂົ້າກັບກາແດງ ນາໆຊາດ ພ້ອມນັ້ນຄະນະນຳອົງການກາແດງລາວໄດ້ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ກາແດງໂລກທີ່ເຊີແນວ ປະເທດສະວິດສເຊີແລນ ແລະ ກອງປະຊຸມທີ່ຊິດນີ ປະເທດອົດສະຕຣາລີ ໂດຍສະເພາະແມ່ນເວົ້າເຖິງການພົວພັນຮ່ວມມືວຽກງານກາແດງນາໆຊາດ.

- ສົ່ງເສີມການຮ່ວມມືລະຫວ່າງອົງການກາແດງ3 ປະເທດ "ອົງການກາແດງລາວ, ກາແດງ ສສ.ຫວຽດນາມ ແລະ ກາແດງກຳປູເຈຍ" ທີ່ໄດ້ມີການເຄື່ອນໄຫວຢ້ຽມຢາມຂອງຄະນະນຳກາແດງຂັ້ນສູງຂອງແຕ່ລະປະເທດ ພ້ອມກັນ

ນັ້ນບັນດາກາແດງແຂວງທີ່ມີຊາຍແດນຕິດຈອດກັນກັບປະເທດໃກ້ຄຽງກໍໄດ້ໄປທັດສະນະສຶກສາແລກປ່ຽນບົດຮຽນດ້ານວິຊາການໂດຍສະເພາະກາແດງສສຫວຽດນາມ, ສະພາກາຊາດໄທ.

- ຮັບທຶນສະໜັບສະໜູນຈາກກາແດງສະວິດສ໌ ເຂົ້າໃສ່ວຽກງານສົ່ງເສີມສຸຂະພາບຊຸມຊົນໂດຍສະເພາະກອງທຶນຊ່ວຍເຫຼືອສຸຂະພາບຜູ້ທຸກຍາກ (ແຂວງຫຼວງພະບາງ, ອຸດົມໄຊ, ສະຫວັນນະເຂດ, ເຊກອງ, ສາລະວັນ, ຈຳປາສັກ), ໂຄງການພັດທະນາອົງກອນ ແລະ ການປັບປຸງການຮັກສາ ສຸຂະພາບພື້ນຖານ (ແຂວງຫຼວງພະບາງ, ອຸດົມໄຊ) ຈຳນວນຫລາຍລ້ານໂດລາ.

- ຮັບທຶນສະໜັບສະໜູນກາແດງຝຣັ່ງ ໃນວຽກງານການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ, ໂຄງການນຳໃຊ້ເຕັກໂນໂລຊີເຂົ້າໃນວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ (ເມືອງຊຽງຮ່ອນ, ເມືອງທົ່ງສາ ແຂວງໄຊຍະບູລີ), ໂຄງການຈັດຫານ້ຳ ແລະ ອະນາໄມສິ່ງແວດລ້ອມທີ່ເມືອງບົວລະພາ ແຂວງຄຳມ່ວນຈຳນວນຫລາຍລ້ານໂດລາ.

- ກາແດງແດນມາກໄດ້ໃຫ້ທຶນສະໜັບສະໜູນໃນໂຄງການປັບປຸງສຸຂພາບຊຸມຊົນ,ສົ່ງເສີມສຸຂະພາບແມ່ ແລະ ເດັກຢູ່ເຂດຫ່າງໄກສອກຫຼີກທີ່ຈັດຕັ້ງປະຕິບັດຢູ່ 4 ແຂວງພາກເໜືອ (ແຂວງຊຽງຂວາງ,ແຂວງຫົວພັນ, ແຂວງຜົ້ງສາລີ ແລະ ແຂວງຫລວງນ້ຳທາ) ມູນຄ່າຫລາຍລ້ານໂດລາ.

- ຮັບທຶນສະໜັບສະໜູນຈາກກາແດງເຢຍລະມັນໃນວຽກງານພັດທະນາເລືອດປອດໄພແລະໂຄງການເຊື່ອມສານຜູ້ຕິດເຊື້ອເອດສ໌ຈຳນວນຫລາຍແສນໂດລາ.

- ຮັບທຶນໝູນວຽນປະຈຳ ຈຳນວນ 10,000 ໂດລາ ຈາກICRCໃນວຽກງານໂຄສະນາ, ເຜີຍແຜ່ພາລະບົດບາດຂອງກາແດງ, ວຽກງານຊອກແຫຼ່ງທຶນ,ສືບຫາວຫາຍາດພີ່ນ້ອງ, ວຽກງານອາສາສະໝັກຊາວໜຸ່ມ, ວຽກງານຈັດຫານ້ຳສະອາດ ແລະ ໃຫ້ການຊ່ວຍເຫຼືອປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກລູກລະເບີດບໍ່ທັນແຕກຢູ່ແຂວງພາກໃຕ້.

- ໄດ້ຮັບທຶນສະໜັບສະໜູນຈາກIFRC ໃນແຕ່ລະປີເຂົ້າໃສ່ຫຼາຍຂົງເຂດວຽກງານຂອງອົງການກາແດງລາວເຊັ່ນ: ວຽກງານການສ້າງຂີດຄວາມສາມາດໃຫ້ພະນັກງານ, ວຽກງານຊ່ວຍເຫຼືອບັນເທົາທຸກ, ວຽກງານສົ່ງເສີມສຸຂະພາບຊຸມຊົນ ແລະ ສະໜັບສະໜຸນທຶນໃນກໍລະນີມີເຫດການສຸກເສີນ ຈຳນວນຫລາຍແສນໂດລາ, ພ້ອມກັນນັ້ນກໍ່ໄດ້ສົ່ງນັກວິຊາການ ແລະ ຊ່ຽວຊານມາຊ່ວຍໃນວຽກງານຕ່າງໆເຊັ່ນ ການກະກຽມກອງປະຊຸມໃຫຍ່ການນຳຂັ້ນສູງກາແດງປະເທດອາຊຽນ ແລະ ກອງປະຊຸມອື່ນໆ.

- ຮັບທຶນສະໜັບສະໜູນຈາກກາແດງອົດສຕຣາລີໃນການຝຶກອົບຮົມວຽກງານ ນະໂຍບາຍການປ້ອງກັນຄວາມຮຸນແຮງຕໍ່ເດັກ, ວຽກງານສົ່ງເສີມສຸຂະພາບຊຸມຊົນຂັ້ນພື້ນຖານໃນບັນດາແຂວງພາກເໜືອ,ກາງ ແລະ ໃຕ້ ຈຳນວນຫລາຍລ້ານໂດລາ, ພ້ອມນັ້ນກໍມີຜູ້ປະສານງານອາສາສະໝັກຈຳນວນໜຶ່ງມາຊ່ວຍໃນການສ້າງຂີດຄວາມສາມາດໃຫ້ພະນັກງານກາແດງລາວ.

- ຄົ້ນຄ້ວາປຶກສາຫາລືຮ່າງນະໂຍບາຍ,ລະບຽບການກ່ຽວກັບການສ້າງກອງທຶນເພື່ອຊ່ວຍເຫຼືອຄອບຄົວຜູ້ທີ່ທຸກຍາກຂາດເຂີນແລະ ມີລູກນ້ອຍເຈັບປ່ວຍຮ້າຍແຮງໃນສັງຄົມ.

## 1.8 ການລົງທຶນຂອງລັດ 15 ປີຜ່ານມາ (2001-2015):

ໃນໄລຍະຜ່ານມາ ພັກ ແລະ ລັດຖະບານ ໄດ້ຈັດສັນງົບປະມານການລົງທຶນຂອງລັດເຂົ້າໃນວຽກງານອົງການກາແດງລາວເປັນສາລະບານໜຶ່ງສະເພາະແລະໄດ້ຮັບຫລາຍຕື້ກີບສຸມໃສ່ວຽກງານສົ່ງເສີມວິຊາການ ແລະ ສຸມໃສ່ການກໍ່ສ້າງພື້ນຖານໂຄງລ່າງ ເຊັ່ນ :

1. ໂຄງການສະໜອງອຸປະກອນຮັບໃຊ້ວຽກງານເລືອດຢູ່ສູນເລືອດແຫ່ງຊາດ.
2. ໂຄງການລົງຕິດຕາມກວດກາບັນດາໂຄງການຂອງລັດແລະຂອງກາແດງສາກົນທີ່ຈັດຕັ້ງຢູ່ບາງແຂວງໃນຂອບເຂດທົ່ວປະເທດ.
3. ໂຄງການສະໜອງເຄື່ອງຮັບໃຊ້ແກ້ໄຂສຸກເສີນເວລາເກີດເຫດການໄພພິບັດຢູ່ສູນກາງແລະບັນດາແຂວງ.
4. ໂຄງການຝຶກອົບຮົມສົ່ງເສີມຄວາມກ້າວໜ້າຂອງແມ່ຍິງກາແດງ.
5. ໂຄງການລົງຕິດຕາມກວດກາການກໍ່ສ້າງວິດຖ່າຍ.
6. ໂຄງການສະໜອງອຸປະກອນຮັບໃຊ້ເຂົ້າໃນວຽກງານວິຊາການ.
7. ໂຄງການດູແລຜູ້ອາຍຸສູງ.
8. ໂຄງການໂຄສະນາເຜີຍແຜ່ພາລະບົດບາດຂອງອົງການກາແດງລາວ.
9. ໂຄງການຕິດຕັ້ງລະບົບບັນຊີສາກົນຂອງ ກດລ ແລະ ຈັດຝຶກອົບຮົມໃຫ້ພະນັກງານວິຊາການ.
10. ໂຄງການສະໜອງອຸປະກອນຮັບໃຊ້ວຽກງານເລືອດຢູ່ສູນເລືອດແຫ່ງຊາດແລະຈັດຊື້ນໍ້າຢາກວດເລືອດ.
11. ໂຄງການຝຶກອົບຮົມວຽກງານຈັດຫານໍ້າແລະສຸຂະພິບານ.
12. ໂຄງການຕິດຕາມຊຸກຍູ້ແລະນໍາພາຂຽນບົດສະຫລຸບລາຍງານການເງິນ.
13. ໂຄງການກວດກາລັດ(ຕິດຕາມແລະກວດການຈັດຕັ້ງປະຕິບັດກິດຈະກໍາຕ່າງໆຂອງກາແດງສູນກາງແລະກາແດງແຂວງ.
14. ໂຄງການເກັບກໍາຂໍ້ມູນກ່ຽວກັບຮ່າງກົດໝາຍກາແດງທົ່ວປະເທດ.
15. ໂຄງການຈັດກອງປະຊຸມທົບທວນວຽກງານກາແດງທົ່ວປະເທດຈັດຢູ່ສູນກາງ.
16. ໂຄງການເຜີຍແຜ່ດໍາລັດໃໝ່ສະບັບເລກທີ່ 138/ລບ,ລົງວັນທີ 13/5/2013 ຈັດຢູ່ສອງພາກເໜືອແລະໃຕ້.

ໂຄງການກໍ່ສ້າງ

17. ໂຄງການສໍາຫລວດແລະອອກແບບອາຄານສູນເລືອດແຫ່ງຊາດ.
18. ໂຄງການຕໍ່ເຕີມອາຄານສາງ 2 ຊັ້ນແລະຍົກລະດັບຫ້ອງນໍ້າ.
19. ໂຄງການບູລະນະຕຶກອາຄານເກົ່າ 2 ຊັ້ນ ກດລ.
20. ໂຄງການກໍ່ສ້າງອາຄານສູນເລືອດແຫ່ງຊາດ 4 ຊັ້ນ.
21. ໂຄງການກໍ່ສ້າງນໍ້າບາດານຢູ່ນະຄອນຫລວງ.
22. ໂຄງການຍົກລະດັບໜ້າທາງເຂົ້າຫ້ອງການແລະຮ່ອງລະບາຍນໍ້າ ກດລ.
23. ໂຄງການປຸກສ້າງຫ້ອງການກາແດງແຂວງສາລະວັນ.
24. ໂຄງການກໍ່ສ້າງນໍ້າລິນຢູ່ແຂວງວຽງຈັນ.

ແລະ ອື່ນໆ...

2. ຕີລາຄາດ້ານດີ,ຂໍ້ຄົງຄ້າງ ແລະ ຖອດຖອນບົດຮຽນ:

2.1. ດ້ານດີ

- ຕະຫລອດໄລຍະ ແຕ່ປີ 2001 ມາຮອດປະຈຸບັນ ຄະນະໜ່ວຍພັກ,ຄະນະນຳອົງການກາແດງລາວພ້ອມທັງພະນັກງານ-ລັດຖະກອນມີຄວາມສາມັກຄີດີແລະໄດ້ມີຄວາມພະຍາຍາມສູງໃນການຫັນເອົາເນື້ອໃນຈິດໃຈການບຸກທະລຸດ້ານຈິນຕະນາການຂອງພັກເຂົ້າສູ່ການປະຕິບັດວຽກງານຕົວຈິງຂອງກາແດງລາວດ້ວຍການເຊື່ອມຊຶມເອກະສານທີ່ສຳຄັນຂອງພັກ-ລັດໃຫ້ພະນັກງານ-ລັດຖະກອນຂອງຕົນດ້ວຍຄວາມເປັນເຈົ້າການ ແລະແທດເໝາະກັບແຕ່ລະເປົ້າໝາຍ.

- ການບຸກລະດົມການບໍລິຈາກເລືອດໄດ້ດຳເນີນໄປຢ່າງກວ້າງຂວາງທັງຢູ່ໃນສູນແລະນອກສູນທັງຮັບປະກັນການສະໜອງເລືອດໃນລະດັບດີ,ວຽກງານຊ່ວຍເຫຼືອບັນເທົາທຸກ,ສົ່ງເສີມສຸຂະພາບຊຸມຊົນ,ການໂຄສະນາແລະຂົນຂວາຍການກຸສົນໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງເຊິ່ງໄດ້ນຳເອົານະໂຍບາຍຂອງພັກ-ລັດໄປສູ່ຊີວິດຕົວຈິງຂອງສັງຄົມອັນເຮັດໃຫ້ສັງຄົມມີຄວາມຮັບຜິດຊອບຮ່ວມກັນແລະຖືກຕ້ອງຕາມທັດສະນະຂອງພັກທີ່ວ່າ: ພັກນຳພາ,ລັດຄຸ້ມຄອງ,ປະຊາຊົນເປັນເຈົ້າ.

- ໄດ້ມີການປັບປຸງ,ບູລະນະການຈັດຕັ້ງຂອງອົງການກາແດງລາວແລະກາແດງທ້ອງຖິ່ນສຳເລັດໂດຍພື້ນຖານ,ມີຄວາມສາມາດຈັດຕັ້ງແລະເຄື່ອນໄຫວວຽກງານກາແດງລາວຢ່າງຕໍ່ເນື່ອງແລະແທດເໝາະກວ່າເກົ່າພ້ອມກັນນີ້ກໍ່ໄດ້ບຳລຸງສ້າງ,ຍົກລະດັບຄວາມຮູ້,ຄວາມສາມາດໃຫ້ແກ່ພະນັກງານ-ສະມາຊິກພັກຢ່າງເປັນປົກກະຕິ.

- ການວາງແຜນໄດ້ຫັນໄປສູ່ວິຊາການທີ່ມີເປົ້າໝາຍ,ຄາດໝາຍທີ່ຕິດພັນກັບສະພາບຄວາມເປັນຈິງຫຼາຍຂຶ້ນ.

- ການຮ່ວມມືກັບຄະນະກຳມະການກາແດງສາກົນ,ສະຫະພັນກາແດງແລະຊີກວົງເດືອນແດງສາກົນ,ບັນດາກາແດງນາໆຊາດແລະອົງການຈັດຕັ້ງສາກົນຕ່າງໆກໍ່ມີລັກສະນະຕັ້ງໜ້າກວ່າເກົ່າໂດຍສະເພາະແມ່ນການຮ່ວມມືກັບສະພາກາແດງສສຫວຽດນາມໄດ້ຫັນໄປສູ່ລວງເລິກທີ່ເປັນຮູບປະທຳຕົວຈິງຫຼາຍຂຶ້ນ,ການຊອກຫາແຫຼ່ງທຶນຈາກການຈັດຕັ້ງທັງພາຍໃນແລະຕ່າງປະເທດມາສະໜັບສະໜູນການຈັດຕັ້ງປະຕິບັດວຽກງານກາແດງລາວກໍ່ຍັງຢູ່ໃນບັນຍາກາດທີ່ດີ.

<u>ສາຍເຫດທີ່ພາໃຫ້ມີດ້ານດີ:</u>

- ຍ້ອນມີມະຕິກອງປະຊຸມໃຫຍ່ ຄັ້ງທີ VII, VIII ແລະ IX ຂອງພັກ, ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ V, VI ແລະ VII ແລະ ມະຕິ, ຄຳສັ່ງຂອງກົມການເມືອງສູນກາງພັກ ແລະ ລັດຖະບານ ຊຶ່ງໄດ້ເປັນທິດທາງ, ທິດນຳ ທີ່ເປັນພື້ນຖານໃຫ້ແກ່ຄະນະພັກ, ຂະແໜງການທຸກຂັ້ນ ໄດ້ນຳໄປຜັນຂະຫຍາຍຈັດຕັ້ງປະຕິບັດໃນແຕ່ລະໄລຍະ.
- ຍ້ອນມີການຊີ້ນຳ-ນຳພາຢ່າງໃກ້ຊິດຕິດແທດຈາກການນຳຂັ້ນສູງ.
- ຍ້ອນມີນະໂຍບາຍການຕ່າງປະເທດຢ່າງຖືກຕ້ອງຂອງພັກ-ລັດເຮົາ ໃນການຍາດແຍ່ງທຶນຮອນຈາກຕ່າງປະເທດ.

- ຍ້ອນການຊີ້ນຳຂອງຄະນະນຳອົງການກາແດງລາວ ແລະ ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ ແລະ ຮ່ວມມືຂອງສັງຄົມ ແລະ ສາກົນໃນການເຄື່ອນໄຫວວຽກງານຂອງອົງການກາແດງລາວ.

- ຍ້ອນຄວາມຕັດສິນໃຈສູງຂອງພະນັກງານ ລັດຖະກອນອົງການກາແດງລາວໃນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນທຸກຂົງເຂດວຽກງານ.

## 2.2. ຂໍ້ຄົງຄ້າງ

ຄຽງຄູ່ກັບຈຸດດີທີ່ກ່າວມາຂ້າງເທິງນັ້ນພວກເຮົາຍັງມີຂໍ້ຄົງຄ້າງ ຈຳນວນໜຶ່ງທີ່ຄວນເອົາໃຈໃສ່ດັ່ງນີ້:

- ພະນັກງານ-ລັດຖະກອນຈຳນວນໜຶ່ງຍັງບໍ່ທັນເຊື່ອມຊຶມຕໍ່ແນວທາງຂອງພັກເລິກເຊິ່ງເທົ່າທີ່ຄວນແລະຍັງບໍ່ເຂົ້າໃຈພາລະບົດບາດແລະໜ້າທີ່ຂອງຕົນຢ່າງເລິກເຊິ່ງ.

- ການຈັດຕັ້ງປະຕິບັດ, ການຜັນຂະຫຍາຍດຳລັດສະບັບໃໝ່ຍັງບໍ່ທັນອອກສູ່ວົງກວ້າງ ເຮັດໃຫ້ສັງຄົມຍັງບໍ່ທັນຮັບ ຮູ້ ແລະ ເຂົ້າໃຈພາລະບົດບາດຂອງອົງການກາແດງລາວເທົ່າທີ່ຄວນ.

- ພະນັກງານຈຳນວນໜຶ່ງຍັງມີຂີດຈຳກັດທາງດ້ານວິຊາການເປັນຕົ້ນແມ່ນດ້ານເຕັກໂນໂລຊີ ແລະ ພາສາຕ່າງປະເທດຍັງບໍ່ທັນເຂັ້ມແຂງ.

- ການແບ່ງຂັ້ນຄຸ້ມຄອງລະຫວ່າງອົງການກາແດງລາວແລະກາແດງທ້ອງຖິ່ນໃນການຈັດຕັ້ງປະຕິບັດຫຼືການປະສານວຽກງານຕ່າງໆຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ.

- ການກວດກາ, ຕິດຕາມຊຸກຍູ້ແລະການປະເມີນຜົນວຽກງານຍັງບໍ່ທັນເປັນລະບົບຕໍ່ເນື່ອງລຽນຕິດໂດຍສະເພາະບັນດາໂຄງການທີ່ບໍ່ມີກາແດງສາກົນໃຫ້ການສະໜັບສະໜູນທຶນ.

- ການສະໜອງທຶນເຂົ້າໃນກິດຈະກຳຕ່າງໆບໍ່ພຽງພໍກັບຄວາມຕ້ອງການ ໃນການເຄື່ອນໄຫວວຽກງານສະນັ້ນຈຶ່ງເຮັດໃຫ້ບາງໂຄງການໄດ້ພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ.

**<u>ສາຍເຫດທີ່ພາໃຫ້ມີດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບາງບັນຫາທີ່ຄວນເອົາໃຈໃສ່</u>**

- ຄວາມຮັບຜິດຊອບແລະສິດເປັນເຈົ້າການໃນການຈັດຕັ້ງປະຕິບັດຂອງບາງຂະແໜງການຂັ້ນສູນກາງແລະທ້ອງຖິ່ນບໍ່ທັນສູງ,ບໍ່ທັນເສີມຂະຫຍາຍສິດເປັນເຈົ້າຄວາມຮັບຜິດຊອບຂອງທຸກພາກສ່ວນເຊິ່ງສະແດງອອກໃນການປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນຄ່ອງຕົວດີເທົ່າທີ່ຄວນ ໂດຍສະເພາະປະສົບການດ້ານວິຊາການຍັງມີຂີດຈຳກັດບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່.

- ຄວາມຮຽກຮ້ອງຕ້ອງການໃນການພັດທະນາວຽກງານກາແດງຢູ່ສູນກາງ ແລະ ທ້ອງຖິ່ນຍັງມີຄວາມຕ້ອງການສູງໃນການພັດທະນາ ແຕ່ຄວາມສາມາດການສະໜອງດ້ານງົບປະມານບໍ່ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານເຮັດໃຫ້ການເຄື່ອນໄຫວກິດຈະກຳຕ່າງໆບໍ່ໄປຕາມແຜນການ.

- ການບັນຈຸພະນັກງານເຂົ້າໃນຕຳແໜ່ງງານຕ່າງໆຍັງບໍ່ທັນພຽງພໍເຊັ່ນ:ບາງຕຳແໜ່ງງານກໍ່ຂາດພະນັກງານຮັບຜິດຊອບ,ໂດຍສະເພາະແມ່ນພະນັກງານວິຊາການ ແລະ ພະນັກງານຄຸ້ມຄອງບໍລິຫານ.

- ສຳລັບອົງການກາແດງແຂວງ, ນະຄອນຫຼວງທີ່ຂາດການອຸ້ມຊູຈາກກາແດງຄູ່ຮ່ວມພັດທະນາແລ້ວການເຄື່ອນໄຫວກິດຈະກຳ ແລະ ການພັດທະນາແມ່ນຍັງຊັກຊ້າຍ້ອນຂາດທຶນສະໜັບສະໜູນ ແລະ ບາງກິດຈະກຳແມ່ນດຳເນີນໄປດ້ວຍຄວາມຫຍຸ້ງຍາກເປັນຕົ້ນແມ່ນວຽກງານຈັດຫາຜູ້ບໍລິຈາກເລືອດຍ້ອນຄວາມບໍ່ເຂົ້າໃຈຂອງສັງຄົມຕໍ່ວຽກງານດັ່ງກ່າວຈຶ່ງເຮັດໃຫ້ ການບໍລິຈາກເລືອດບໍ່ໄດ້ຕາມແຜນການ.

- ການປະຕິບັດນະໂຍບາຍຕໍ່ອາສາສະໝັກຕ່າງໆຍັງບໍ່ທັນມີລະບຽບຫຼັກການໃນການນຳໃຊ້ເທື່ອ,ສະນັ້ນຈຶ່ງເຮັດໃຫ້ຄວາມເປັນເຈົ້າຂອງວຽກງານຂອງ ອສບ ບໍ່ໄດ້ຕາມຄາດໝາຍ.

### 2.3. <u>ບາງບົດຮຽນທີ່ຖອດຖອນໄດ້</u>

ຈາກດ້ານດີ ແລະ ຂໍ້ຄົງຄ້າງທີ່ກ່າວມາຂ້າງເທິງນັ້ນພວກເຮົາສາມາດຖອດຖອນບົດຮຽນໄດ້ດັ່ງນີ້:

1. ການເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ຕົວເລກຄາດໝາຍສູ້ຊົນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາວຽກງານກາແດງລາວຢ່າງເລິກເຊິ່ງ ເປັນບັນ ຫາຫຼັກທີ່ຈະເຮັດໃຫ້ເນື້ອໃນຂອງແຜນໄດ້ຮັບການຈັດຕັ້ງປະຕິບັດ-ຜັນຂະຫຍາຍເຂົ້າສູ່ລວງເລິກ ແລະ ຖືກທິດ.
2. ການສ້າງ ແລະ ປັບປຸງນິຕິກຳທີ່ເໝາະສົມ, ທັນ ແລະ ສອດຄ່ອງກັບສະພາບການ, ຈະເປັນບ່ອນອີງທີ່ສຳຄັນໃຫ້ແກ່ພະນັກງານ-ລັດຖະກອນ ອົງການກາແດງລາວ, ອົງການກາແດງທ້ອງຖິ່ນ ປະຕິບັດດ້ວຍຄວາມວ່ອງໄວ, ຊັດເຈນຂຶ້ນ ແລະ ການສ້າງກົນໄກເພື່ອສ້າງເງື່ອນໄຂທີ່ຄ່ອງຕົວໃຫ້ສັງຄົມເຂົ້າຮ່ວມໃນການສະໜັບສະໜູນວຽກງານກາແດງລາວໃຫ້ມີການພັດທະນາ ແລະ ກ້າວໄປສູ່ຄວາມເຂັ້ມແຂງ.
3. ການຍົກສູງຄວາມຮັບຜິດຊອບ ແລະ ຄວາມຕັດສິນໃຈໃນການນຳພາ-ຈັດຕັ້ງປະຕິບັດວຽກງານຕົວຈິງຂອງຄະນະນຳແຕ່ລະຂັ້ນບົນພື້ນຖານການແບ່ງງານຄວາມຮັບຜິດຊອບ,ມີການຕິດຕາມກວດກາເປັນປົກະຕິ,ເປັນປັດໃຈພື້ນຖານເຮັດໃຫ້ແຕ່ລະແຜນງານໄດ້ຮັບການຈັດຕັ້ງປະຕິບັດແລະໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.
4. ການຂຶ້ນແຜນເລືອກເຟັ້ນໂຄງການໃນວຽກງານກາແດງລາວເພື່ອສຸມທຶນຮອນຈາກລັດຖະບານ,ຈາກການຍາດແຍ່ງການຊ່ວຍເຫຼືອຂອງສາກົນຈະເຮັດໃຫ້ວຽກງານກາແດງລາວໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມແຂງແລະສຳເລັດຜົນ.
5. ເອົາໃຈໃສ່ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ-ລັດຖະກອນໃຫ້ສູງຂຶ້ນເຊັ່ນ:ດ້ານທິດສະດີການເມືອງ,ວິຊາສະເພາະ, ພາສາຕ່າງປະເທດແລະ ນຳເອົາເທັກໂນໂລຊີອັນໃໝ່ເຂົ້າໃນການພັດທະນາວຽກງານຂອງອົງການກາແດງລາວ.
6. ກິດຈະກຳໃນການຊອກຫາແຫຼ່ງທຶນຄວນໄດ້ຮັບການປັບປຸງທາງດ້ານວິຊາການໃຫ້ດີຂຶ້ນເພື່ອໃຫ້ເປັນທີ່ຍອມຮັບຂອງສັງຄົມ.

## ພາກທີ II

# ວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາວຽກງານກາແດງລາວໄລຍະ 10 ປີ (2016-2025)

1. ບ່ອນອີງໃນການກຳນົດແຜນຍຸດທະສາດ :

ວິໄສທັດຮອດປີ 2030 ແລະ ແຜນຍຸດທະສາດພັດທະນາວຽກງານກາແດງລາວຮອດປີ 2025 ໄດ້ກຳນົດຂຶ້ນໂດຍອີງໃສ່ແນວທາງ, ແຜນນະໂຍບາຍ, ທິດນຳ, ມະຕິ, ຄຳສັ່ງຂອງພັກ-ລັດ, ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຂອງລັດຖະບານໃນແຕ່ລະໄລຍະ, ອີງໃສ່ສະພາບຈຸດພິເສດ, ເງື່ອນໄຂ, ທ່າແຮງຕົວຈິງ ແລະ ສະພາບການພັດທະນາຂອງປະເທດ, ຂອງສາກົນ ແລະ ພາກພື້ນ, ຊຶ່ງເອກະສານສຳຄັນທີ່ເປັນບ່ອນອີງຕົ້ນຕໍ ມີດັ່ງນີ້ :

- ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກດ ຮ່າງລາຍງານການເມືອງຂອງພັກຕໍ່ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ.
- ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VII (2011-2015), ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020) ແລະ ຮ່າງແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄລຍະແຕ່ປີ 2016-2025 ແລະ ວິໄສທັດຮອດປີ 2030.
- ເປົ້າໝາຍສະຫະສະວັດດ້ານການພັດທະນາ (MDGs) ແລະ ເປົ້າໝາຍການພັດທະນາແບບຍືນຍົງ ຂອງສະຫະປະຊາຊາດ (SDGs).
- ຄຳສັ່ງເລກທີ 24/ນຍ ວ່າດ້ວຍການຄົ້ນຄວ້າວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມໄລຍະ 10 ປີ (2016-2025) ແລະ ແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020).
- ອີງໃສ່ຜົນສຳເລັດໃນການຈັດຕັ້ງປະຕິບັດແຜນພັດທະນາວຽກງານກາແດງໃນໄລຍະຜ່ານມາ.

2. ສະພາບຄວາມເປັນຈິງພາຍໃນປະເທດ ແລະ ສະພາບແວດລ້ອມສາກົນ :

2.1. ສະພາບແວດລ້ອມສາກົນ :

ຕາມການຄາດຄະເນ ຂອງສະຫະປະຊາຊາດ ແລະ ທະນາຄານໂລກເຫັນວ່າເສດຖະກິດໂລກ ແລະ ພາກພື້ນມີທ່າອ່ຽງຂະຫຍາຍຕົວດີຂຶ້ນ, ສຳລັບເສດຖະກິດຂອງ ສປຈີນ, ອິນເດຍ ຍັງສືບຕໍ່ຂະຫຍາຍຕົວສູງ ແລະ ຍັງເປັນຜູ້ຂັບເຄື່ອນເສດຖະກິດໂລກຢູ່. ບັນດາປະເທດອາຊຽນ, ປະເທດຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຍັງສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອບັນດາປະເທດດ້ອຍພັດທະນາ ເພື່ອຫລຸດຜ່ອນຄວາມແຕກໂຕນກັນທາງດ້ານການພັດທະນາ; ການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ, ເຂົ້າຮ່ວມຂະບວນການຄ້າເສລີອາຊຽນ, ອາຊຽນ+3 ແລະ ອາຊີຕາເວັນອອກ ຂອງປະເທດເຮົາໄດ້ເປັນໂອກາດດີໃນການເຂົ້າເຖິງຕະຫລາດໂລກຫລາຍຂຶ້ນ; ການເຊື່ອມໂຍງເສດຖະກິດຂອງປະເທດເຂົ້າກັບສາກົນ ແລະ ພາກພື້ນ ໄດ້ເປີດໂອກາດໃຫ້ປະເທດເຮົາໄດ້ສະແດງບົດບາດໃນເວທີສາກົນຫລາຍຂຶ້ນ, ພ້ອມທັງສາມາດຍາດແຍ່ງ,ດຶງດູດເອົາການລົງທຶນຈາກຕ່າງປະເທດ ເຂົ້າມາພັດທະນາປະເທດຫລາຍຂຶ້ນ.

ໄປຄຽງຄູ່ກັບກາລະໂອກາດ ແລະ ສິ່ງອໍານວຍດັ່ງກ່າວ, ການພັດທະນາປະເທດເຮົາ ໂດຍລວມ, ໂດຍສະເພາະການພັດທະນາວຽກງານກາແດງ ຍັງປະເຊີນໜ້າກັບສິ່ງທ້າທາຍຫລາຍປະການເປັນຕົ້ນແມ່ນ :

- ວິກິດການທາງດ້ານການເງິນ ແລະ ເສດຖະກິດໂລກ ອາດຈະເກີດຂຶ້ນໄດ້, ຍ້ອນຄວາມບໍ່ສົມດູນຂອງລະບົບການເງິນ-ເສດຖະກິດໂລກໃນແຕ່ລະໄລຍະ, ຊຶ່ງຈະສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ກໍ່ຄືການຍາດແຍ່ງການຊ່ວຍເຫລືອລ້າເຂົ້າໃນການພັດທະນາວຽກງານກາແດງ.
- ທ່າອ່ຽງທາງດ້ານໄພທໍາມະຊາດທີ່ນັບມື້ນັບຖີ່ ແລະ ມີຄວາມຮຸນແຮງຫລາຍຂຶ້ນ, ນອກຈາກນັ້ນບັນຫາພະຍາດຕ່າງໆກໍ່ມີການລະບາດຂຶ້ນຢ່າງຕໍ່ເນື່ອງ ເຊິ່ງໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຢ່າງມະຫາສານຕໍ່ບັນດາປະເທດໃນພາກພື້ນ ແລະ ໃນໂລກ ແລະ ໄດ້ສົ່ງຜົນກະທົບໃນລະດັບໃດໜຶ່ງຕໍ່ເສດຖະກິດ-ສັງຄົມຂອງປະເທດເຫລົ່ານັ້ນ.

2.2. **ສະພາບຄວາມເປັນຈິງຂອງປະເທດເຮົາ.**

2.2.1. **ຂໍ້ສະດວກ ແລະ ສິ່ງອໍານວຍ :**

- ປະເທດເຮົາມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ປະຊາຊົນມີຄວາມສາມັກຄີປອງດອງ.
- ພື້ນຖານເສດຖະກິດມີຄວາມເຂັ້ມແຂງ, ໜັກແໜ້ນຂຶ້ນເລື້ອຍໆ, ເສດຖະກິດແຫ່ງຊາດ ມີການຂະຫຍາຕົວຕໍ່ເນື່ອງ ແລະ ມີຄວາມໝັ້ນທ່ຽງ.
- ພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງ, ຍົກລະດັບ ແລະ ພັດທະນາຢ່າງທີ່ວເຖິງກວ່າເກົ່າ ແລະ ມີຄວາມຮັບປະກັນຫລາຍຂຶ້ນ.
- ປະເທດເຮົາມີທີ່ຕັ້ງຢູ່ໃຈກາງຂອງປະເທດອະນຸພາກພື້ນແມ່ນໍ້າຂອງຕອນລຸ່ມ ທີ່ສາມາດພັດທະນາເປັນປະເທດບໍລິການທາງຜ່ານດ້ານຄົມມະນາຄົມ-ຂົນສົ່ງລະຫວ່າງປະເທດອ້ອມຂ້າງ ແລະ ໄປຍັງປະເທດທີສາມ, ສ້າງໃຫ້ເປັນສູນກາງເສດຖະກິດ ແລະ ໃຈກາງບໍລິການຂອງພາກພື້ນໄດ້.
- ປະເທດເຮົາມີທ່າແຮງທາງດ້ານຊັບພະຍາກອນທໍາມະຊາດຫລາຍຢ່າງ ທີ່ໄດ້ປຽບ ທີ່ຍັງອຸດົມສົມບູນ ແລະ ມີທ່າແຮງບົ່ມຊ້ອນ ແຫລ່ງທ່ອງທ່ຽວດ້ານວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດຫລາຍ ທີ່ຍັງບໍ່ທັນໄດ້ຮັບການພັດທະນາເທື່ອ.
- ປະເທດເຮົາປະກອບດ້ວຍຫລາຍຊົນເຜົ່າ ແລະ ມີວັດທະນະທໍາ, ຮີດຄອງປະເພນີທີ່ເປັນເອກະລັກແຕກຕ່າງກັນ ໄດ້ເປັນທ່າແຮງໜຶ່ງທີ່ສໍາຄັນທາງດ້ານວັດທະນະທໍາຂອງປະເທດ.
- ໃນຫລາຍປີມານີ້ ພັກ-ລັດຖະບານ ໄດ້ເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດຢ່າງຕັ້ງໜ້າ ແລະ ໄດ້ເຮັດໃຫ້ພົນລະເມືອງລາວເຮົາ ມີຄວາມຮູ້ຄວາມສາມາດ ແລະ ສຸຂະພາບແຂງແຮງຫລາຍຂຶ້ນ, ທັງໄດ້ເອົາໃຈໃສ່ເສີມຂະຫຍາຍມູນເຊື້ອອັນດຸໝັ່ນໃນການອອກແຮງງານ ແລະ ພູມປັນຍາຂອງປະຊາຊົນຢ່າງບໍ່ຢຸດຢັ້ງ.

ໄປຄຽງຄູ່ກັບກາລະໂອກາດ ແລະ ສິ່ງອໍານວຍດັ່ງກ່າວ, ການພັດທະນາປະເທດເຮົາ ໂດຍລວມ, ໂດຍສະເພາະ ການພັດທະນາວຽກງານກາແດງ ຍັງປະເຊີນໜ້າກັບສິ່ງທ້າທາຍຫລາຍປະການເປັນຕົ້ນແມ່ນ :

- ໄພທໍາມະຊາດທີ່ມີຄວາມຮຸນແຮງເກີດຂຶ້ນເລື້ອຍໆ ເປັນຕົ້ນແມ່ນລົມພາຍຸ, ໄພນໍ້າຖ້ວມ, ດິນເຊາະເຈື່ອນ, ໄພແຫ້ງແລ້ງ ແລະ ອັກຄີໄພ, ນອກຈາກນັ້ນ ຍັງມີການລະບາດຂອງພະຍາດຕ່າງໆ ແລະ ພະຍາດຕາມລະດູການ ລວມທັງອຸບັດຕິເຫດທາງຖະໜົນ ເຊິ່ງໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນຢ່າງຫຼວງ ຫຼາຍ. ອົງການກາແດງລາວຕ້ອງໄດ້ເອົາໃຈໃສ່ປະຕິບັດພາລະບົດບາດທາງດ້ານມະນຸດສະທໍາ, ເອົາໃຈໃສ່ທ້າງຫາກະກຽມ

ຕອບໂຕ້ໄພພິບັດໃຫ້ການຊ່ວຍເຫຼືອເບື້ອງຕົ້ນຢ່າງທັນການ, ປະກອບສ່ວນໃນການປ້ອງກັນພະຍາດ ແລະ ສົ່ງເສີມສຸຂະພາບ, ເປັນເຈົ້າການໃນການຈັດຫາເລືອດທີ່ພຽງພໍ ແລະ ປອດໄພໃນຂອບເຂດທົ່ວປະເທດ.

### 2.2.2. ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ :

- ປະຈຸບັນຄອບຄົວທຸກຍາກ, ບ້ານທຸກຍາກ ສ່ວນໃຫຍ່ແມ່ນຢູ່ເຂດຊົນນະບົດຫ່າງໄກສອກຫລີກທຸລະກັນດານ ເສັ້ນທາງລົດບໍ່ເຂົ້າເຖິງ ຫລື ເຂົ້າເຖິງບໍ່ສະດວກ ໄດ້ເປັນຂໍ້ຫຍຸ້ງຍາກໃຫ້ແກ່ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.
- ການດໍາລົງຊີວິດ ແລະ ການທໍາມາຫາກິນຂອງປະຊາຊົນ ຍັງເຮັດແບບຄວາມເຄີຍຊິນ, ການຜະລິດຍັງອີງໃສ່ທໍາມະຊາດ, ກໍາລັງການຜະລິດຍັງອ່ອນນ້ອຍ, ລະດັບການສຶກສາຕໍ່າ, ບໍ່ທັນຮູ້ນໍາໃຊ້ເຕັກນິກວິທະຍາສາດວິທະຍາການໃໝ່ເຂົ້າໃສ່ການຜະລິດ, ການຜະລິດເປັນສິນຄ້າບໍ່ທັນຂະຫຍາຍຕົວ, ຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າຍັງຫຍຸ້ງຍາກຫລາຍ.
- ການປ່ຽນແປງຂອງດິນຟ້າອາກາດ, ເກີດໄພພິບັດທໍາມະຊາດ ແລະ ການລະບາດພະຍາດຕ່າງໆຍັງສືບຕໍ່ກີດໜ່ວງການຜະລິດ ແລະ ການດໍາລົງຊີວິດຂອງປະຊາຊົນເຮົາ ໄດ້ເປັນອຸປະສັກຕໍ່ການແກ້ໄຂຄວາມທຸກຍາກຂອງປະຊາຊົນ.
- ພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນຢູ່ຊົນນະບົດເຂດພູດອຍຫ່າງໄກສອກຫລີກ, ເຂດທີ່ໝັ້ນການປະຕິວັດ ຍັງບໍ່ທັນເຂົ້າເຖິງຢ່າງທົ່ວເຖິງ.

+ ສິ່ງທ້າທາຍ ທີ່ອົງການກາແດງລາວ ຈະຕ້ອງໄດ້ປະເຊີນໜ້າ ແລະ ຈໍາເປັນຕ້ອງໄດ້ຮັບມື ໃນຊຸມປີຂ້າງໜ້າມີດັ່ງນີ້:

- ປັບປຸງ ຖານະທາງດ້ານກົດໝາຍ ແລະ ໂຄງຮ່າງການຈັດຕັ້ງໃໝ່.

ອົງການກາແດງລາວ ໄດ້ມີດໍາລັດສະບັບ ເລກທີ 138 / ລບ ລົງວັນທີ 13 ພຶດສະພາ 2013 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານອົງການກາແດງລາວ ທີ່ຖືກຮັບຮອງເອົານໍາມາໃຊ້. ອົງການກາແດງລາວຈໍາເປັນຕ້ອງໄດ້ປັບປຸງໂຄງຮ່າງການຈັດຕັ້ງໃນທຸກລະດັບໃຫ້ຖືກຕາມພາລະບົດບາດຂອງຕົນ ( ກາແດງຂັ້ນສູນກາງ, ກາແດງຂັ້ນແຂວງ, ກາແດງຂັ້ນເມືອງ ). ຄະນະກໍາມະການກາແດງຂັ້ນສູນກາງ ຈະຕ້ອງໄດ້ຖືກສ້າງຕັ້ງຂຶ້ນ ເພື່ອຮັບປະກັນໃຫ້ກາແດງແຫ່ງຊາດມີການເຄື່ອນໄຫວໄດ້ດີ. ການພັດທະນາຂີດຄວາມສາມາດ ແລະ ການສະໜັບສະໜູນທາງດ້ານຊັບພະຍາກອນ ແມ່ນມີຄວາມຈໍາເປັນ. ນະໂຍບາຍ, ວິທີການ ແລະ ລະບົບການຕ່າງໆ ຕ້ອງຢູ່ໃນສະພາບການທີ່ສາມາດຮັບມືກັບ ສິ່ງທ້າທາຍໃນໄລຍະຊຸມປີຂ້າງໜ້າ.

- **ການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ທາງດ້ານຊັບພະຍາກອນມະນຸດ.**

ຊັບພະຍາກອນມະນຸດ ແມ່ນບັນຫາສໍາຄັນ ແລະ ຮີບດ່ວນ ພາຍໃນອົງການກາແດງລາວ. ຈໍານວນພະນັກງານທີ່ມີຄວາມຊໍານິຊໍານານ ແລະ ປະສົບການ, ການຈັດວາງຕໍາແໜ່ງງານທີ່ເໝາະສົມ ແລະ ການຮັກສາພະນັກງານໄວ້ ແມ່ນເປັນປັດໃຈທີ່ຕັດສິນ ໃນການໃຫ້ການບໍລິການທີ່ມີຄຸນນະພາບ ແລະ ມີປະສິດທິຜົນ. ສະນັ້ນ ແນວທາງນະໂຍບາຍດ້ານຊັບພະຍາກອນມະນຸດ ສໍາລັບພະນັກງານ, ສະມາຊິກ, ອາສາສະໝັກ, ຊາວໜຸ່ມກາແດງ ແລະ ການພັດທະນາຂີດຄວາມສາມາດຂອງເຂົາເຈົ້າ ແມ່ນມີຄວາມຈໍາເປັນ ຕ້ອງໄດ້ຮັບການປັບປຸງ.

- ຮັບປະກັນຄວາມພຽງພໍ ແລະ ມີຄວາມຍືນຍົງ ທາງດ້ານທຶນຮອນ ແລະ ຊັບພະຍາກອນ.

ຈະມີສິ່ງທ້າທາຍ ທີ່ອາດສາມາດເປັນໄປໄດ້ ໃນການລະດົມທຶນ ແລະ ຊອກຫາແຫລ່ງທຶນ ເພື່ອຮັບປະກັນ ໃຫ້ມີອຸປະກອນ ແລະ ການສະໜັບສະໜູນ ໃນການຕອບໂຕ້ ຢ່າງມີປະສິດທິຜົນ ຕໍ່ຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງຜູ້ປະສົບເຄາະຮ້າຍ ແລະ ການປະຕິບັດວຽກງານຢ່າງຕໍ່ເນື່ອງຂອງ ອົງການກາແດງລາວ. ຮັບປະກັນ ແລະ ພັດທະນາດ້ານຊັບພະຍາກອນຕ່າງໆ ເພື່ອຈະຊ່ວຍໃຫ້ ອົງການກາແດງລາວ ກາຍເປັນອົງການທີ່ເຂັ້ມແຂງດ້ວຍຕົນເອງ, ແນໃສ່ຫຼຸດຜ່ອນ ການເພິ່ງພາອາໃສ ການຊ່ວຍເຫຼືອ ດ້ານການເງິນ ແລະ ດ້ານເຕັກນິກ ຈາກ ກາແດງເພື່ອນມິດ ເທື່ອລະກ້າວ. ຍຸດທະສາດການຊອກຫາແຫລ່ງທຶນ ແລະ ການສ້າງແຫລ່ງລາຍຮັບ ແມ່ນມີຄວາມຈຳເປັນ ໃນນີ້ແມ່ນລວມ ທັງການສ້າງຂີດຄວາມສາມາດໃນການ ຂຽນບົດສະເໜີໂຄງການເພື່ອຂໍການສະໜັບສະໜູນ ແລະ ການເຂົ້າເຖິງແຫລ່ງທຶນຈາກຕ່າງປະເທດ. ນອກຈາກນີ້ລະບົບການບໍລິຫານ-ຈັດການ ແລະ ການລາຍງານດ້ານການເງິນ ກໍ່ມີຄວາມຈຳເປັນ ຕ້ອງໄດ້ຮັບການພັດທະນາເຊັ່ນດຽວກັນ.

- ນຳເອົາຫລັກການພື້ນຖານ ແລະຄຸນຄ່າທາງດ້ານມະນຸດສະທຳ ເຂົ້າສູ່ການປະຕິບັດຕົວຈິງ.

ຄວາມເຂົ້າໃຈຂອງສັງຄົມ ຕໍ່ຫລັກການພື້ນຖານ ແລະ ຄຸນຄ່າທາງດ້ານມະນຸດສະທຳ ຍັງຈຳກັດ ແລະ ການເຄື່ອນໄຫວໂຄສະນາ ຂອງອົງການກາແດງລາວ ຕໍ່ວຽກງານ ດັ່ງກ່າວຍັງບໍ່ທັນກ້ວາງຂວາງ ແລະ ເຮັດບໍ່ທັນໄດ້ດີ, ສະນັ້ນ ເຮັດໃຫ້ຄວາມຮັບຮູ້ຂອງສັງຄົມ ຕໍ່ຄວາມເປັນໄປໄດ້ໃນການສະໜັບສະໜູນຈາກເຂົາເຈົ້າມີໜ້ອຍ. ການສ້າງຄວາມເຂົ້າອົກເຂົ້າໃຈ ໃນການເອື້ອເຟື້ອເພື່ອແຜ່ ແລະ ກະຕຸກຊຸກຍູ້ ໃຫ້ປະຊາຊົນປະກອບສ່ວນ ແລະ ສະໜັບສະໜູນ ໃນວຽກງານຕ່າງໆ ຂອງກາແດງລາວ ຍັງເປັນສິ່ງທີ່ທ້າທາຍໃນຕໍ່ໜ້າ. ອົງການກາແດງລາວມີຄວາມຈຳເປັນຕ້ອງໄດ້ອອກແຮງ ໃນການໂຄສະນາປຸກລະດົມສັງຄົມໃຫ້ຫລາຍຂຶ້ນ ເພື່ອໃຫ້ມີການຊ່ວຍເຫລືອສະໜັບສະໜູນ ໃນວຽກງານຂອງຕົນ.

3. ວິໄສທັດ ຮອດປີ 2030.

1. ທົ່ວປະເທດ ມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍຢ່າງໜັກແໜ້ນ; ລະບົບການເມືອງຢູ່ຂັ້ນຮາກຖານ ອັນມີໜ່ວຍພັກເປັນແກນນຳມີຄວາມໜັກແໜ້ນ, ປະຊາຊົນມີຄວາມສາມັກຄີປອງດອງເປັນປຶກແຜ່ນ; ທິດນຳການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງແຂງແຮງ ແລະ ທົ່ວເຖິງ.

2. ຊົນນະບົດເຂດຫ່າງໄກສອກຫລີກ,ເຂດພູດອຍຊົນເຜົ່າ,ເຂດທີ່ໝັ້ນການປະຕິວັດ,ເຂດບ້ານ,ເມືອງວິລະຊົນ ໄດ້ຮັບການພັດທະນາຢ່າງຮອບດ້ານ ຕາມທິດທີ່ຍືນຍົງ ແລະ ມີໂສມໜ້າໃໝ່ທີ່ຈະແຈ້ງ, ຂະບວນການສ້າງບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ, ການສ້າງບ້ານໃຫຍ່ກາຍເປັນໃຈກາງທາງດ້ານເສດຖະກິດ-ວັດທະນະທຳສັງຄົມ ຢູ່ເຂດຈຸດສຸມ ແລະ ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ໄດ້ຮັບການຈັດຕັ້ງປະຕິບັດເປັນຮູບປະທຳຕົວຈິງຢ່າງແຂງແຮງ, ລະດັບການການພັດທະນາລະຫວ່າງຕົວເມືອງກັບຊົນນະບົດ ແລະ ເຂດແຄ້ວນມີຄວາມສົມສ່ວນກັນ ແລະ ປະຊາຊົນຢູ່ຊົນນະບົດໄດ້ຊົມໃຊ້ການບໍລິການດ້ານຕ່າງໆຢ່າງທົ່ວເຖິງ.

3. ຄວາມທຸກຍາກຂອງປະຊາຊົນໄດ້ຮັບການແກ້ໄຂຢ່າງສິ້ນເຊີງ, ຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນຢູ່

ຊົນນະບົດໄດ້ຮັບການຍົກສູງຂຶ້ນລື່ນລະດັບປະຈຸບັນ 3 ເທົ່າ, ຄອບຄົວສ່ວນໃຫຍ່ມີລາຍຮັບທີ່ໝັ້ນຄົງ, ພໍຢູ່ພໍກິນ ແລະ ຮັ່ງມີກ

## 4. ແຜນຍຸດທະສາດການພັດທະນາວຽກງານກາແດງ ໄລຍະແຕ່ປີ 2016-2025.

### 4.1. ທິດທາງລວມ.

- ສືບຕໍ່ປະຕິບັດມາດຕະການຍຸດທະສາດຫັນລົງຮາກຖານຢ່າງແຂງແຮງ, ສຸມໃສ່ການສ້າງບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ ຕາມທິດນຳການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາໃຫ້ທົ່ວເຖິງ ເພື່ອຮັບປະກັນເຮັດໃຫ້ຮາກຖານມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມສະຫງົບ-ປອດໄພທີ່ໜັກແໜ້ນ, ປະຊາຊົນມີຄວາມສາມັກຄີປອງດອງ ແລະ ເປັນປົກແຜ່ນ.
- ສຸມໃສ່ການພັດທະນາຊົນນະບົດໃຫ້ກາຍເປັນສະໜາມຮົບອັນດັບໜຶ່ງຂອງການພັດທະນາປະເທດ ດ້ວຍການ ສົມທົບແໜ້ນ ການເຮັດຢ່າງມີຈຸດສຸມ ຕິດພັນກັບການເຮັດທົ່ວໄປ, ໂດຍສຸມໃສ່ສ້າງບ້ານໃຫຍ່ເປັນໃຈກາງທາງດ້ານເສດຖະກິດ-ວັດທະນະທຳສັງຄົມຢູ່ເຂດຈຸດສຸມ ແລະ ກາຍເປັນຕົວເມືອງນ້ອຍໃນຊົນນະບົດໃຫ້ທົ່ວເຖິງ ໂດຍສະເພາະເຂດຫ່າງໄກສອກຫລີກ,ເຂດພູດອຍຊົນເຜົ່າ,ເຂດທີ່ໝັ້ນການປະຕິວັດ,ເຂດບ້ານ,ເມືອງວິລະຊົນທີ່ຍັງທຸກຍາກ, ເພື່ອຮັບປະກັນເຮັດໃຫ້ຊົນນະບົດໄດ້ຊົມໃຊ້ໝາກຜົນຂອງການພັດທະນາດ້ວຍອັດຕາສ່ວນທີ່ສົມເຫດສົມຜົນ ແລະ ໄດ້ຮັບການພັດທະນາແບບຍືນຍົງ, ກາຍເປັນຊຸມຊົນໃໝ່, ເປັນເຂດພັດທະນາໃໝ່ ທີ່ນຳໃຊ້ຊັບພະຍາກອນທຳມະຊາດແບບບໍ່ບົກແຫ້ງ ແລະຫລຸດຜ່ອນຄວາມແຕກໂຕນທາງດ້ານການພັດທະນາລະຫວ່າງຊົນນະບົດກັບຕົວເມືອງແລະເຂດແຄ້ວນ.
- ສືບຕໍ່ປະຕິບັດ 4 ບາດກ້າວບຸກທະລຸຢ່າງແຂງແຮງ, ໂດຍສະເພາະການບຸກທະລຸດ້ານການແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຕາມຄາດໝາຍ ໂດຍຖືເອົາຄອບຄົວ,ບ້ານ,ເມືອງ ແລະ ແຂວງທີ່ມີອັດຕາສ່ວນຄວາມທຸກຍາກສູງເປັນເປົ້າໝາຍຈຸດສຸມ ດ້ວຍມາດຕະການສົ່ງເສີມການຜະລິດເປັນສິນຄ້າສ້າງລາຍໄດ້ຂອງຄອບຄົວປະຊາຊົນ ແລະ ພັດທະນາຊົນນະບົດໂດຍມີນະໂຍບາຍສົ່ງເສີມເປັນພິເສດຕໍ່ການລົງທຶນຂອງພາກສ່ວນເສດຖະກິດຕ່າງໆ ຕິດພັນກັບການກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ແລະ ການສຶກສາອົບຮົມໃຫ້ຄວາມຮູ້ດ້ານຕ່າງໆແກ່ປະຊາຊົນຢູ່ເຂດຊົນນະບົດທີ່ຍັງຫຍຸ້ງຍາກເປັນຕົ້ນແມ່ນດ້ານການປູກ, ການລ້ຽງ, ແບບແຜນວິທີການທຳມາຫາກິນ ແລະ ການຜະລິດແບບໃໝ່; ການຈັດສັນພູມລຳເນົາທີ່ໝັ້ນຄົງ; ບ່ອນທຳມາຫາກິນທີ່ຖາວອນ ແລະ ອາຊີບທີ່ໝັ້ນທ່ຽງ ແລະ ການສ້າງນັກພັດທະນາກອນກັບທີ່ ເພື່ອຮັບປະກັນການບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDG1) ແລະ ເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາຊາດ (SDG).

### 4.2. ຄາດໝາຍລວມ :

ເປົ້າໝາຍລວມຂອງແຜນຍຸດທະສາດພັດທະນາວຽກງານກາແດງລາວແຕ່ປີ 2016-2025 ຄັ້ງນີ້ແມ່ນສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໜັກແໜ້ນ,ສຳເລັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາຢ່າງສົມບູນ, ນຳເອົາປະເທດຊາດຫລຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ໂດຍການສ້າງໃຫ້ໄດ້ການຫັນປ່ຽນຮູບແບບການພັດທະນາຕາມທິດເສີມຂະຫຍາຍທ່າແຮງບົ່ມຊ້ອນ ແລະ ທ່າແຮງໄດ້ປຽບຂອງປະເທດ, ເຂົ້າຮ່ວມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ, ສ້າງພື້ນຖານ ແລະ ບາດລ້ຽວໃໝ່ ໃຫ້ແກ່ການພັດທະນາປະເທດເຮົາພາຍຫລັງຫລຸດພົ້ນອອກຈາກສະຖານາພາບປະເທດດ້ອຍພັດທະນາ.

ແຜນພັດທະນາວຽກງານກາແດງດັ່ງກ່າວຈະໄດ້ຖືກຜັນຂະຫຍາຍໃຫ້ໄປຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 8 (2016-2020 ແລະ 2016-2025) ຍຸດທະສາດ ແລະ ແຜນງານສໍາລັບການສົມທົບແຜນນະໂຍບາຍການບໍລິການດ້ານສາທາລະນະສຸກສໍາລັບແມ່ແລະເດັກ (2016-2025) ຂອງແຜນພັດທະນາຂະແໜງສາທາລະນະສຸກ ແລະເປົ້າໝາຍສະຫະສະວັດ ແຫ່ງການພັດທະນາຂອງ ສປປ ລາວ ແລະ ທິດທາງຍຸດທະສາດແຫ່ງການພັດທະນາ ຂອງສະຫະພັນກາແດງສາກົນ ທີ່ເວົ້າວ່າ: "ໃນການໃຫ້ການຊ່ວຍເຫລືອປະຊາຊົນຜູ້ທຸກຍາກ ແລະ ດ້ອຍໂອກາດ ".

4.3. ຄາດໝາຍສູ້ຊົນໄລຍະແຕ່ປີ 2016 – 2025 :

- ປັບປຸງອົງການກາແດງລາວຂັ້ນສູນກາງ,ຂັ້ນແຂວງ ແລະ ຂັ້ນເມືອງໃຫ້ມີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ບຸກຄະລາກອນ.

- ພັດທະນາວຽກງານເລືອດໃຫ້ມີການບໍລິການທີ່ມີຄຸນນະພາບ ແນໃສ່ຮັບປະກັນການຕອບສະໜອງເລືອດທີ່ປອດໄພແທດເໝາະກັບຄວາມຕ້ອງການຂອງສັງຄົມປະກອບສ່ວນເຂົ້າໃນການສົ່ງເສີມສຸຂະພາບຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນເທື່ອລະກ້າວ.

- ປຸກລະດົມການບໍລິຈາກເລືອດທີ່ປອດໄພແບບສະໝັກໃຈໂດຍບໍ່ຮຽກຮ້ອງຄ່າຕອບແທນນາກຸ່ມເປົ້າໝາຍໃຫ້ພຽງພໍກັບຜູ້ເຈັບປ່ວຍທີ່ນອນປິ່ນປົວຢູ່ຕາມໂຮງໝໍຕ່າງໆ.

- ຊ່ວຍເຫລືອບັນເທົາທຸກຕໍ່ຜູ້ໄດ້ຮັບຜົນກະທົບຈາກໄພພິບັດທາງທໍາມະຊາດ ແລະ ມະນຸດສ້າງຂຶ້ນ.
- ສົ່ງເສີມໃຫ້ປະຊາຊົນບັນດາເຜົ່າທີ່ຢູ່ເຂດຫ່າງໄກສອກຫລີກ ຮູ້ຈັກຮັກສາສຸຂະພາບຂັ້ນພື້ນຖານ, ຈັດຫານໍ້າສະອາດ ແລະ ໂພສະນາການ, ສ້າງເງື່ອນໄຂໃຫ້ປະຊາຊົນເຂດຊົນນະບົດໄດ້ເຂົ້າເຖິງການບໍລິການທາງດ້ານສຸຂະພາບຢ່າງທົ່ວເຖິງ.
- ສືບຕໍ່ຍາດແຍ່ງເອົາການຊ່ວຍເຫລືອ ແລະ ການມີສ່ວນຮ່ວມຈາກພາຍໃນ ແລະ ຕ່າງປະເທດໃຫ້ໄດ້ຫລາຍຂຶ້ນ.
- ໂຄສະນາເຜີຍແຜ່ຫລັກການພື້ນຖານ ຂອງຂະບວນການກາແດງ, ກົດໝາຍມະນຸດສະທໍາ ແລະ ບົດບາດຍິງ-ຊາຍ ອອກສູ່ສັງຄົມໃຫ້ກວ້າງຂວາງ.

5. ການກໍານົດເປົ້າໝາຍວຽກຈຸດສຸມບູລິມະສິດ :

ເພື່ອຮັບປະກັນບັນລຸຕາມຄາດໝາຍສູ້ຊົນ ແລະ ໄປຕາມທິດທາງລວມຂອງແຜນຍຸດທະສາດການພັດທະນາວຽກງານກາແດງ ໄລຍະແຕ່ປີ 2016-2025 ອົງການກາແດງລາວໄດ້ກໍານົດເປົ້າໝາຍວຽກຈຸດສຸມບູລິມະສິດທີ່ຈະສຸມໃສ່ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງມີດັ່ງລຸ່ມນີ້ :

5.1. ເປົ້າໝາຍທີ 1 : ວຽກງານຫ້ອງການ.

- ເຜີຍແຜ່ ພາລະບົດບາດຂອງອົງການກາແດງລາວ ສະບັບປັບປຸງໃໝ່ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ຄູ່ຮ່ວມພັດທະນາໃຫ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ.

- ຮ່ວມມືກັບສະຫະພັນກາແດງແລະຊີກວົງເດືອນແດງສາກົນປະຈໍາພາກພື້ນ (IFRC), ຄະນະກໍາມະການກາແດງສາກົນ ( ICRC ) ແລະ ກາແດງຄູ່ຮ່ວມງານກ່ຽວກັບວຽກງານພັດທະນາອົງການ.

- ບູລະນະ, ປັບປຸງບັນດານິຕິກໍາ, ໂຄງຮ່າງການຈັດຕັ້ງຂັ້ນຕ່າງໆ ໃຫ້ແທດເໝາະກັບພາລະບົດບາດ ສິດໜ້າທີ່ຕາມດໍາລັດສະບັບປັບປຸງໃໝ່ ໃຫ້ຄົບຖ້ວນຕາມການກໍານົດຕໍາແໜ່ງງານ.

- ສ້າງກົດໝາຍຂອງອົງການກາແດງລາວໃຫ້ສໍາເລັດ.
- ເອົາໃຈໃສ່ໃນການຄຸ້ມຄອງຊັບສົມບັດຄົງທີ່ ແລະ ເຄື່ອນທີ່ ບໍ່ໃຫ້ຕົກເຮ່ຍເສຍຫາຍ, ພ້ອມທັງຂຶ້ນບັນຊີຢ່າງລະອຽດ ແລະ ລາຍງານຫ້ອງການຊັບສິນຂອງລັດຕາມລະບຽບຫຼັກການ.
- ຕິດຕາມການຂໍດິນປຸກສ້າງສໍານັກງານໃໝ່ອົງການກາແດງລາວ ທີ່ໄດ້ສະເໜີຂໍນໍາລັດຖະບານ (ປະຈຸບັນຢູ່ໃນຂັ້ນຕອນຈັດສັນເພື່ອຂໍອະນຸມັດຈາກລັດຖະບານ).
- ຈັດຕັ້ງປະຕິບັດການລົງທຶນຂອງລັດຖະບານທີ່ສະພາແຫ່ງຊາດໄດ້ຮັບຮອງເອົາເຂົ້າໃນແຜນການພັດທະນາວຽກງານຂອງອົງການກາແດງລາວໃຫ້ສໍາເລັດໂດຍສະເພາະໂຄງການສົ່ງເສີມວິຊາການ, ໂຄງການສືບຕໍ່, ໂຄງການກໍ່ສ້າງ ແລະ ເງິນບໍລິຫານປົກກະຕິ.
- ສະຫຼຸບສັງລວມການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດປະຈໍາແຕ່ລະສົກປີສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ຫ້ອງວ່າການລັດຖະບານ, ອົງການກວດກາລັດ.
- ສ້າງແຜນຂໍການລົງທຶນຂອງລັດເຂົ້າໃນວຽກງານບໍລິຫານປົກກະຕິ, ວຽກງານສົ່ງເສີມດ້ານວິຊາການ, ການກໍ່ສ້າງພື້ນຖານໂຄງລ່າງ.
- ສະເໜີຂໍລະຫັດເລືອດເຂົ້າສາລະບານບັນຊີ-ງົບປະມານລັດຈາກກະຊວງການເງິນກ່ຽວກັບການໃຊ້ຈ່າຍປົກກະຕິ ໃນວຽກງານເລືອດ.
- ຈັດຕັ້ງປະຕິບັດ, ກວດກາ, ຕິດຕາມປະເມີນຜົນ ບັນດາໂຄງການທີ່ໄດ້ຮັບທຶນສະໜັບສະໜຸນຈາກພາຍໃນ ແລະ ຕ່າງປະເທດຂອງແຕ່ລະຂະແໜງການ.
- ປັບປຸງວຽກງານຂໍ້ມູນຂ່າວສານແລະເທັກໂນໂລຊີ (IT) ໃຫ້ເປັນລະບົບດີຂຶ້ນກວ່າເກົ່າ.
- ເອົາໃຈໃສ່ຍົກລະດັບຄວາມຮູ້, ຄວາມສາມາດດ້ານທິດສະດີການເມືອງ, ວິຊາການ, ພາສາຕ່າງປະເທດໃຫ້ພະນັກງານ ໂດຍສະເພາະພາສາອັງກິດ ໃຫ້ສູງຂຶ້ນເພື່ອຮອງຮັບໜ້າທີ່ວຽກງານທີ່ການຈັດຕັ້ງມອບໝາຍໃຫ້.
- ຂຽນບົດສະເໜີໂຄງການເກັບກໍາສະຖິຕິແຍກເພດພະນັກງານອົງການກາແດງລາວເພື່ອຂໍການສະໜັບສະໜູນທຶນເຂົ້າໃນການເຄື່ອນໄຫວດ້ານວິຊາການ.
- ເຮັດບົດສະຫຼຸບລາຍງານແຜນກິດຈະກໍາແຕ່ລະໄລຍະໃຫ້ຂັ້ນເທິງຢ່າງເປັນປົກກະຕິ.
- ຮ່ວມມືຄະນະກໍາມະການດາແດງສາກົນ, ກັບກາແດງນາໆຊາດ, ອົງການຈັດຕັ້ງສາກົນ, ລວມທັງບັນດາອົງການທີ່ບໍ່ຂຶ້ນກັບລັດຖະບານ ໂດຍຍຶດໝັ້ນຢູ່ໃນຫຼັກການກໍ່ຄືທິດນໍາຂອງພັກ ແລະ ລັດເຮົາ ທັງນີ້ກໍ່ເພື່ອຍາດແຍ່ງເອົາການສະໜັບສະໜູນ, ຊ່ວຍເຫຼືອລ້າເພື່ອນໍາມາພັດທະນາວຽກງານກາແດງລ່າວ່ ເພື່ອມາພັດທະນາໃຫ້ໄປຕາມແຜນຍຸດທະສາດຂອງກາແດງ.
- ຂຶ້ນແຜນງົບປະມານດ້ານອຸປະກອນຮັບໃຊ້, ນໍ້າຢາກວດພະຍາດ, ເຄື່ອງທີ່ລະນຶກ, ເຄື່ອງບໍາລຸງເພື່ອຮັບໃຊ້ເວລາອອກເຄື່ອນໄຫວຮັບບໍລິຈາກເລືອດ.
- ຕິດຕາມ, ກວດກາ ແລະ ປະເມີນຜົນກ່ຽວກັບບັນດາໂຄງການຕ່າງໆ.

5.2. ເປົ້າໝາຍທີ 2 : ວຽກງານຄຸ້ມຄອງໄພພິບັດ ແລະ ຊ່ວຍເຫລືອບັນເທົາທຸກ.

- ຈັດຝຶກອົບຮົມທົບທວນຕອບໂຕ້ໄພພິບັດແຫ່ງຊາດເພື່ອຍົກລະດັບຄວາມຮູ້ໃນການກະກຽມເພື່ອຕອບໂຕ້ໄພພິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໃຫ້ພະນັກງານກາແດງສູນກາງ,ກາແດງແຂວງແລະກາແດງເມືອງ.
- ຈັດຝຶກອົບຮົມການປະເມີນຄວາມຕ້ອງການໃນພາວະສຸກເສີນໃຫ້ແກ່ພະນັກງານກາແດງສູນກາງ,ແຂວງ ແລະ ເມືອງທີ່ມີຄວາມສ່ຽງສູງຕໍ່ໄພພິບັດ.
- ເຂົ້າຮ່ວມກອງປະຊຸມຄະນະກຳມະການຄຸ້ມຄອງໄພພິບັດພາກພື້ນ ແລະ ການຝຶກອົບຮົມດ້ານວິຊາການຕ່າງໆ.
- ປະຕິບັດວຽກງານການຫ້າງຫາກະກຽມຕອບໂຕ້ໄພພິບັດເວລາເກີດເຫດການສຸກເສີນ.
- ຈັດກອງປະຊຸມກ່ອນລະດູຝົນເພື່ອຫ້າງຫາກະກຽມເຄື່ອງແຮໄວ້ສາງເພື່ອນຳໄປຊ່ວຍເຫຼືອເວລາເກີດເຫດສຸກເສີນ.
- ຕິດຕາມສະພາບດິນຟ້າອາກາດ ແລະ ສະພາບໄພພິບັດທີ່ອາດເກີດຂຶ້ນໃນແຕ່ລະທ້ອງຖິ່ນເພື່ອກຽມພ້ອມໃຫ້ການຊ່ວຍເຫລືອບັນເທົາທຸກແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດໃຫ້ທ່ວງທັນ.
- ລົມທົບວຽກງານການປ່ຽນແປງສະພາບດິນຟ້າອາກາດເຂົ້າໃນໂຄງການຫລຸດຜ່ອນຄວາມສ່ຽງໄພພິບັດຊຸມຊົນ.
- ຮ່ວມມືກັບກາແດງຝລັ່ງໃນໂຄງການຫລຸດຜ່ອນຄວາມສ່ຽງໄພພິບັດຢູ່ 02 ເມືອງ: ມະຫາໄຊ ແລະ ເຊບັ້ງໄຟ ແຂວງຄຳມ່ວນ ພາຍໃຕ້ໂຄງການ Dipecho.
- ສະເໜີຂໍທຶນຈາກທະນາຄານພັດທະນາອາຊີ ການາດາ (ADB CANADA)ປະຈຳຢູ່ປະເທດ ຟີລິບປິນ ເພື່ອສະໜັບສະໜູນໂຄງການ CBDRR ທີ່ມີສ່ວນຮ່ວມຂອງແມ່ຍິງ, ຊຶ່ງຈະຈັດຕັ້ງປະຕິບັດຢູ່ແຂວງບໍລິຄຳໄຊ.
- ປະສານລົມທົບກັບກົມຄຸ້ມຄອງໄພພິບັດແລະປ່ຽນແປງດິນຟ້າອາກາດ (ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) ກ່ຽວກັບການຮ່າງກົດໝາຍວ່າດ້ວຍໄພພິບັດແຫ່ງຊາດ.
- ໂຄສະນາສຶກສາອົບຮົມປູກຈິດສຳນຶກໃຫ້ຄວາມຮູ້ແກ່ຊຸມຊົນໃນເຂດທີ່ມີຄວາມສ່ຽງສູງໃຫ້ມີສະຕິລະວັງຕົວໃນການຫ້າງຫາກະກຽມປ້ອງກັນໄພພິບັດທີ່ຈະເກີດຂຶ້ນ ເພື່ອຫຼີກເວັ້ນ ຫຼື ຫຼຸດຜ່ອນຄວາມເສຍຫາຍທາງຊີວິດ ແລະ ຊັບສິນ.
- ຈັດກອງປະຊຸມປະສານລົມທົບກັບກອງສົ່ງເສີມສຸຂະພາບຊຸມຊົນ ເພື່ອລົມທົບໃຫ້ກົມກຽວກັນ ວຽກງານໂຄສະນາອະນາໄມ 3 ສະອາດ, ວຽກງານປະຖົມພະຍາບານ, ວຽກງານຈິດຕະສັງຄົມເຂົ້າໃນວຽກງານຫຼຸດຜ່ອນຄວາມສ່ຽງໄພພິບັດຊຸມຊົນ ແລະ ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກໄພພິບັດ.
- ຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອຜູ້ທີ່ໄດ້ຮັບເຄາະຮ້າຍຈາກລູກລະເບີດຝັງດິນຢູ່ແຂວງເຊກອງ,ແຂວງອັດຕະປື ແລະ ແຂວງອື່ນໆທີ່ມີເງື່ອນໄຂ.
- ເພີ່ມທະການປະສານງານກັບພາກສ່ວນວິຊາການຕ່າງໆກ່ຽວກັບການໃຫ້ຂໍ້ມູນສະພາບການປ່ຽນແປງດິນຟ້າອາກາດໃນແຕ່ລະໄລຍະ.

- ປະສານສົມທົບກັບ ຄະນະກຳມະການກາແດງສາກົນ (ICRC), ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ (IFRC), ກາແດງ ແລະ ກາຊີກວົງເດືອນແດງແຫ່ງຊາດຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອຂໍທຶນສະໜັບສະໜູນໃນການຈັດຕັ້ງປະຕິບັດໂຄງການຫຼຸດຜ່ອນຄວາມສ່ຽງໄພພິບັດຊຸມຊົນ.
- ສ້າງແຜນສະເໜີງົບປະມານຈາກລັດຖະບານເພື່ອຮັບໃຊ້ການລົງເຮັດການປະເມີນຢ່າງຮີບດ່ວນ ພາຍຫລັງເກີດໄພພິບັດຢ່າງຮ້າຍແຮງ ແລະ ເຮັດການຕອບໂຕ້ຮ່ວມກັບກາແດງແຂວງທີ່ເກີດໄພພິບັດ.
- ສ້າງແຜນສະເໜີງົບປະມານຈາກລັດຖະບານສຳລັບຈັດຊື້ເຄື່ອງຊ່ວຍເຫລືອບັນເທົາທຸກເພື່ອໄປໃຫ້ການຊ່ວຍເຫລືອຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດຕາງໆໃນທົ່ວປະເທດ.
- ຮ່ວມມືແລະຂໍທຶນສະໜັບສະໜູນກັບໂຄງການຊ່ວຍເຫລືອໂດຍກົງນຳສະຖານທູດຕ່າງໆເພື່ອໃຫ້ການຊ່ວຍເຫລືອປະຊາຊົນທີ່ຖືກເຄາະຮ້າຍຈາກໄພພິບັດຕ່າງໆ.
- ຂໍທຶນກັບກອງທຶນຊ່ວຍເຫລືອໄພພິບັດພາກພື້ນ (DREF)ຈາກສະຫະພັນກາແດງສາກົນປະຈຳພາກພື້ນ.
- ສ້າງແຜນສະເໜີງົບປະມານຈາກລັດຖະບານ ເພື່ອຝຶກອົບຮົມວຽກງານຄຸ້ມຄອງສາງແລະລົງຕິດຕາມກວດກາສາງພາກຕ່າງໆ.
- ສົມທົບກັບກາແດງລຸກຊໍາບວກໃນການຂະຫຍາຍວຽກງານກ່ຽວກັບການສ້າງຄວາມເຂັ້ມແຂງໃນການຄຸ້ມຄອງລະບົບສາງຢູ່ແຂວງບໍລິຄຳໄຊ ແລະ ແຂວງສະຫວັນນະເຂດ.
- ສ້າງແຜນງົບປະມານຈາກລັດຖະບານເພື່ອຈັດຊື້ເຄື່ອງຮັບໃຊ້ໃຫ້ແກ່ສາງພາກຕ່າງໆ.
- ປັບປຸງປຶ້ມຄູ່ມືຄືນໃໝ່ກ່ຽວກັບວຽກງານການຄຸ້ມຄອງລະບົບສາງເພື່ອໃຫ້ແທດເໝາະກັບຕົວຈິງ.
- ເຂົ້າຮ່ວມກອງປະຊຸມ ຄະນະກຳມະການຄຸ້ມຄອງໄພພິບັດພາຍໃນ ແລະ ພາກພື້ນ, ການອົບຮົມດ້ານວິຊາການຕ່າງໆເພື່ອຍົກລະດັບຄວາມຮູ້, ຄວາມສາມາດໃຫ້ແກ່ພະນັກງານຜູ້ທີ່ປະຕິບັດວຽກງານ.

5.3. ເປົ້າໝາຍທີ 3 : ວຽກງານສົ່ງເສີມສຸຂະພາບຊຸມຊົນ.

- ຝຶກອົບຮົມປະຖົມພະຍາບານໃຫ້ແກ່ສຳນັກງານອົງການຂອງລັດ, ອົງການຈັດຕັ້ງສາກົນ, ບໍລິສັດຕ່າງໆ ແລະອາສາສະໝັກໜ່ວຍລົດປະຖົມພະຍາບານຂອງອົງການກາແດງລາວພ້ອມທັງປັບປຸງປຶ້ມຄູ່ມືປະຖົມພະຍາບານໃຫ້ສົມບູນຂຶ້ນ.
- ສະໜອງອຸປະກອນຖົງຢາໃຫ້ຄູອາຈານຕາມໂຮງຮຽນ, ສະຖາບັນການສຶກສາ ແລະສຳນັກງານຕຳຫຼວດຈະລາຈອນ 4 ຕົວເມືອງໃນນະຄອນຫຼວງວຽງຈັນ.
- ປະສານງານກັບອຳນາດການປົກຄອງແຂວງ, ເມືອງ ແລະ ບ້ານ ໃນການປະກອບສ່ວນທຶນສົມທົບການກໍ່ສ້າງນ້ຳລິນ ແລະ ວິດຖ່າຍ.
- ກໍ່ສ້າງນ້ຳລິນ ແລະ ວິດຖ່າຍໃຫ້ແກ່ ບ້ານເປົ້າໝາຍຢູ່ ແຂວງຫຼວງນ້ຳທາ, ເມືອງວຽງທອງ ແລະ ເມືອງຄຳເກີດແຂວງບໍລິຄຳໄຊ ແລະ ບັນດາແຂວງອື່ນໆທີ່ມີເງື່ອນໄຂ.

- ເກັບກຳຂໍ້ມູນນ້ຳລິນ, ວິດຖ່າຍທີ່ເປ່ເພ, ຂຶ້ນແຜນງົບປະມານນຳສະເໜີຂໍການຊ່ວຍເຫຼືອຈາກ ອົງການຈັດຕັ້ງສາກົນ ເພື່ອບູລະນະສ້ອມແປງ.
- ຕິດຕາມການປົກປັກຮັກສາ ແລະ ນຳໃຊ້ນ້ຳລິນ, ວິດຖ່າຍ ຂອງຊາວບ້ານ ແລະ ການຮັກສາສຸຂະພາບຊຸມຊົນ ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກນ້ອຍ ທີ່ມີອາຍຸຕ່ຳກວ່າ 5 ປີ.
- ລົງເຄື່ອນໄຫວໃຫ້ຄວາມຮູ້ຜູ້ຕິດເຊື້ອເອດສ໌ ແລະ ຄອບຄົວຜູ້ຕິດເຊື້ອ ພ້ອມທັງສະໜັບສະໜູນຄ່າເດີນທາງໃຫ້ໄປກວດກາ/ຕິດຕາມສຸຂະພາບຢູ່ໂຮງໝໍຕ່າງໆ ເພື່ອເຮັດໃຫ້ສຸຂະພາບດີຂຶ້ນ ແລະ ທັງເປັນການຫຼຸດຜ່ອນການຈຳແນກລັງກຽດເຊິ່ງກັນ ແລະ ກັນ.
- ປະກອບສ່ວນເຂົ້າໃນວຽກງານການປ້ອງກັນພະຍາດໄຂ້ຍຸງແລະຕິດຕາມການລະບາດຂອງພະຍາດຕ່າງໆ.
- ໃຫ້ການບໍລິການຊ່ວຍເຫຼືອຜູ້ເກີດອຸບັດຕິເຫດທາງຖະໜົນ.
- ປັບປຸງວຽກງານຊ່ວຍເຫລືອຜູ້ປະສົບອຸປະຕິເຫດຕາມທ້ອງຖະໜົນໃຫ້ດີ.
- ໃຫ້ການຊ່ວຍເຫຼືອທາງດ້ານຈິດຕະສັງຄົມໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດຕ່າງໆ.

5.4. ເປົ້າໝາຍທີ 4 : ວຽກງານໂຄສະນາ ແລະ ຂົນຂວາຍການກຸສົນ.

- ໂຄສະນາພາລະບົດບາດຂອງອົງການກາແດງລາວ,ກົດໝາຍມະນຸດສະທຳສາກົນບົນພື້ນຖານ 7 ຫຼັກການຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ.
- ປຶກສາຫາລືໃນການຈັດຊຸດອົບຮົມວຽກງານຊອກຫາແຫຼ່ງທຶນຮ່ວມກັບສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນປະຈຳພາກພື້ນ.
- ປັບປຸງພາລະບົດບາດການເຄື່ອນໄຫວ, ປຸກລະດົມຂົນຂວາຍແລະສ້າງເຄືອຂ່າຍວຽກງານອາສາສະໝັກກາແດງໃນໂຮງຮຽນ, ສຳນັກງານ, ອົງການແລະເຂດຊຸມຊົນ.
- ແລກປ່ຽນບົດຮຽນ, ກິດຈະກຳ ອາສາສະໝັກກາແດງກັບບັນດາກາແດງຄູ່ຮ່ວມງານໃນຂົງເຂດແລະພາກພື້ນ.
- ປະສານງານກັບກາແດງອົດສະຕຣາລີ ກ່ຽວກັບການຮັບເອົາອາສາສະໝັກອົດສະຕຣາລີ ມາເປັນທີ່ປຶກສາ, ປັບປຸງບຸກຄະລາກອນ ແລະ ຂົນຂວາຍຊອກຫາແຫຼ່ງທຶນແບບຍືນຍົງ ຂອງອົງການກາແດງລາວ.
- ປະຕິບັດວຽກງານສືບຫາວຫາຍາດພີ່ນ້ອງທີ່ພັດພາກຈາກກັນ.
- ປຸກລະດົມຂົນຂວາຍ, ຊອກຫາແຫຼ່ງທຶນຈາກພາກສ່ວນຕ່າງໆຂອງສັງຄົມທັງພາຍໃນແລະຕ່າງປະເທດ.
- ສ້າງນັກໂຄສະນາຂົນຂວາຍກ່ຽວກັບວຽກງານກາແດງໃຫ້ກາຍເປັນມືອາຊີບ.

5.5. ເປົ້າໝາຍທີ 5 : ວຽກງານງານ.

- ສູ້ຊົນໃຫ້ບັນລຸການຮັບບໍລິຈາກເລືອດແບບສະໝັກໃຈ ບໍ່ຮຽກຮ້ອງສິ່ງຕອບແທນໃຫ້ໄດ້ 100%.
- ບັນລຸການເຈາະເກັບເລືອດຈາກຜູ້ບໍລິຈາກແບບສະໝັກໃຈບໍ່ຮຽກຮ້ອງສິ່ງຕອບແທນໃຫ້ໄດ້ຢ່າງໜ້ອຍ 1% ຂອງຈຳນວນປະຊາກອນໃນປະເທດຕໍ່ປີ ຫລື 10 ຖົງຕໍ່ປະຊາກອນ 1,000 ຄົນຕໍ່ປີ.
- ເລືອດທຸກໆຖົງໄດ້ຜ່ານການກວດວິເຄາະຢ່າງເປັນລະບົບ.

- ສົ່ງເສີມການນຳໃຊ້ເລືອດ ແລະ ສ່ວນປະກອບຂອງເລືອດຢ່າງຖືກຕ້ອງເໝາະສົມ ໃຫ້ໄດ້ຫລາຍກ່ວາ 50%.
- ສ້າງລະບົບການຄຸ້ມຄອງການບໍລິການເລືອດ ແລະ ປະສົມປະສານກັນລະຫວ່າງສູນເລືອດຂັ້ນຕ່າງໆໃນທົ່ວປະເທດ.
- ຕອບສະໜອງເລືອດທີ່ພຽງພໍປອດໄພແລະທັນເວລາໃຫ້ແກ່ຄົນເຈັບທີ່ຕ້ອງການເລືອດຕາມໂຮງໝໍຕ່າງໆ ແນໃສ່ປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍແຜນຍຸດທະສາດດ້ານສາທາລະນະສຸກ (ຫລຸດຜ່ອນອັດຕາການຕາຍຂອງເດັກ, ຫລຸດຜ່ອນອັດຕາການຕາຍຂອງແມ່ ແລະ ເພີ້ມອາຍຸຍືນສະເລ່ຍໃຫ້ສູງຂຶ້ນ) ແລະ ສືບຕໍ່ປະກອບສ່ວນໃນການບັນລຸເປົ້າໝາຍສະຫັດສະວັດແຫ່ງການພັດທະນາ ປີ 2015 ເຊັ່ນ:
  - + MDG#1: ລຶບລ້າງ ຄວາມທຸກຍາກ.
  - + MDG#4: ຫລຸດຜ່ອນ ອັດຕາການຕາຍຂອງເດັກ.
  - + MDG#1: ຫລຸດຜ່ອນ ອັດຕາການຕາຍຂອງແມ່ ແລະ ປັບປຸງສຸກຂະພາບຂອງແມ່.
  - + MDG#1: ຕ້ານພະຍາດຕິດຕໍ່: ພະຍາດເອດສ໌ ແລະ ພະຍາດຕິດຕໍ່ອື່ນໆ
- ຈັດຕັ້ງປະຕິບັດລະບົບຄຸ້ມຄອງຄຸນນະພາບໃນການບໍລິຈາກເລືອດ.
- ສ້າງສູນເລືອດແຫ່ງຊາດໃຫ້ເປັນສູນເລືອດທີ່ເຂັ້ມແຂງ ແລະ ເຄື່ອນໄຫວໄດ້ດີທາງດ້ານວິຊາການ,ສາມາດເປັນໃຈກາງໃນການປະສານງານດ້ານວຽກງານເລືອດ.
- ສ້າງສູນເລືອດເຂດຢູ່ 3 ແຂວງ (ແຂວງພະບາງ,ສະຫວັນນະເຂດ ແລະ ຈຳປາສັກ) ໃຫ້ເປັນສູນເລືອດທີ່ມີຄວາມເຂັ້ມແຂງ ສາມາດຊ່ວຍເຫລືອບັນດາສູນເລືອດແຂວງທີ່ໃກ້ຄຽງ.
- ສ້າງສູນເລືອດຂັ້ນແຂວງໃຫ້ມີຄວາມພ້ອມທາງດ້ານການບໍລິການ ແນໃສ່ຮັບປະກັນຕອບສະໜອງເລືອດ ທີ່ພຽງພໍ ແລະ ປອດໄພພາຍໃນແຂວງຂອງຕົນ ແລະ ສົ່ງຕໍ່ໃຫ້ບັນດາແຂວງອື່ນໆ.
- ຂະຫຍາຍຕາໜ່າງໜ່ວຍເກັບຮັກສາເລືອດຂັ້ນເມືອງ ຫລື ໂຮງໝໍລະດັບຕ່າງໆ.
- ຈັດຕັ້ງຮັບບໍລິຈາກເລືອດ ຮ່ວມກັບບັນດາກະຊວງ, ສຳນັກງານ ແລະ ອົງການຕ່າງໆ ເພື່ອສະໜອງເລືອດໃຫ້ພຽງພໍ ແລະ ປອດໄພ.
- ສູ້ຊົນອອກຮັບບໍລິຈາກເລືອດຮ່ວມກັບເປົ້າໝາຍຕ່າງໆເປັນຕົ້ນ ສຳນັກງານ, ອົງການ, ສະຖາບັນການສຶກສາ, ໂຮງຈັກໂຮງງານ ບ່ອນອື່ນໆໃຫ້ໄດ້ 1400 ບ່ອນ ແລະ ໃຫ້ໄດ້ເລືອດ 38,000 ຖົງຕາມແຜນການ ແລະ ຮອດປີ 2025 ໃຫ້ໄດ້ 80,000 ຖົງ.
- ຕິດຕາມຊຸກຍູ້ການປຸກລະດົມບໍລິຈາກເລືອດ, ອົບຮົມຊາວໜຸ່ມອາສາສະໝັກບໍລິຈາກເລືອດ ແລະ ຜູ້ປຸກລະດົມຂົນຂວາຍເປົ້າໝາຍຮັບບໍລິຈາກເລືອດ.
- ຈັດອົບຮົມຄູຝຶກ ປຸກລະດົມຈັດຫາເລືອດໃຫ້ພະນັກງານວິຊາການແຕ່ລະແຂວງໃນທົ່ວປະເທດ.
- ປະສານງານກັບພາກລັດ, ອົງການຈັດຕັ້ງສາກົນ, ກາແດງຄູ່ຮ່ວມງານ ແລະ ທຸກພາກສ່ວນໃນສັງຄົມ ລວມທັງພາກສ່ວນທຸລະກິດ ເພື່ອຂໍການສະໜັບສະໜູນທຶນເຂົ້າໃນແຜນງານເລືອດແຫ່ງຊາດ.

- ປັບປຸງຄູ່ມືການປະຕິບັດງານທາງດ້ານວິຊາການ ແລະ ອົບຮົມໃຫ້ແກ່ພະນັກງານ-ລັດຖະ ກອນຂອງສູນເລືອດແຫ່ງຊາດ ແລະ ສູນເລືອດແຂວງໃນຂອບເຂດທົ່ວປະເທດ.
- ຮັບປະກັນການມີເລືອດພຽງພໍ, ຮັບປະກັນເລືອດປອດໄພ, ກວດກາຄວບຄຸມຄຸນນະພາບ, ພັດທະນາຊັບພະຍາກອນມະນຸດ ແລະ ສູນເລືອດແຫ່ງຊາດ ແລະ ສູນເລືອດຂັ້ນແຂວງ ແລະ ພັດທະນານິຕິກຳ ແລະ ການຮ່ວມມືທັງພາຍໃນ ແລະ ຕ່າງປະເທດ.

## 6. ແຜນງານແລະໂຄງການຈຸດສຸມຂອງອົງການກາແດງລາວໃນໄລຍະແຕ່ປີ 2016-2025 ມີດັ່ງນີ້:

1. ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານ-ລັດຖະກອນ ເຂົ້າໃຈເຊື່ອມຊຶມຕໍ່ແນວທາງນະ ໂຍບາຍຂອງພັກ-ລັດ, ປະຕິບັດ 4 ບຸກທະລຸຕາມມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ຈັດຕັ້ງປະຕິບັດດຳລັດລັດຖະບານເລກທີ 138/ລບໃຫ້ສຳເລັດແຕ່ອົງການກາແດງລາວຮອດອົງການກາແດງທ້ອງຖິ່ນ.
2. ເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດໂດຍສະເພາະແມ່ນບຳລຸງສ້າງໃຫ້ໄດ້ຖັນແຖວພະນັກງານ-ລັດຖະກອນໃຫ້ມີຄວາມຮູ້, ຄວາມສາມາດຈຳນວນໜຶ່ງ ເພື່ອສືບທອດ, ປ່ຽນແທນການນຳຂັ້ນຕ່າງໆ ແລະກາຍເປັນຊ່ຽວຊານດ້ານວິຊາການຂອງວຽກງານກາແດງລາວເພື່ອຕອບສະໜອງໃນການປະຕິບັດໜ້າທີ່ການເມືອງຂອງຕົນເປັນຢ່າງດີ.
3. ສ້າງແຜນພັດທະນາວຽກງານກາແດງລາວແຕ່ປີ 2016-2025 ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII, IX (2016-2025) ແທດເໝາະກັບສະພາບຄວາມເປັນຈິງຕາມພາລະບົດບາດຂອງ, ໜ້າທີ່ຂອງວຽກງານກາແດງລາວ.
4. ສ້າງແຜນການ-ການລົງທຶນຂອງລັດແລະຂໍການຊ່ວຍເຫຼືອທຶນຈາກສາກົນເພື່ອພັດທະນາວຽກງານກາແດງ.
5. ສຸມໃສ່ການກໍ່ສ້າງພື້ນຖານໂຄງລ່າງຂອງອົງການກາແດງລາວຢູ່ສູນກາງແລະທ້ອງຖິ່ນໂດຍສະເພາະແມ່ນສຳນັກງານໃຫຍ່ອົງການກາແດງລາວ, ຫ້ອງການກາແດງແຂວງ, ຫ້ອງການກາແດງເມືອງ, ສູນເລືອດແຂວງ, ເມືອງທີ່ມີເງື່ອນໄຂແລະການກໍ່ສ້າງສາງເຄື່ອງຢູ່ສູນກາງແລະແຂວງທີ່ມີເງື່ອນໄຂເພື່ອຮອງຮັບເຄື່ອງຊ່ວຍເຫຼືອບັນເທົາທຸກພ້ອມກັນນັ້ນກໍ່ສ້ອມແປງສາງສູນກາງປະຈຳພາກ (ພາກເໜືອຢູ່ອຸດົມໄຊ, ພາກກາງຢູ່ຄຳມ່ວນແລະພາກໃຕ້ຢູ່ຈຳປາສັກ).
6. ຍົກລະດັບຄວາມຮູ້ໃຫ້ແກ່ພະນັກງານກາແດງລາວ, ກາແດງແຂວງແລະກາແດງເມືອງໃນການກະກຽມເພື່ອຕອບໂຕ້ໄພພິບັດໃຫ້ເປັນທີມຕອບໂຕ້ໄພພິບັດທີ່ມີປະສິດທິພາບແລະມີປະສິດທິຜົນຂຶ້ນ.
7. ຕິດຕາມສະພາບດິນຟ້າອາກາດ ແລະ ສະພາບໄພພິບັດທີ່ອາດເກີດຂຶ້ນໃນແຕ່ລະທ້ອງຖິ່ນເພື່ອກຽມພ້ອມໃຫ້ການຊ່ວຍເຫຼືອບັນເທົາທຸກ ແກ່ຜູ້ທີ່ປະສົບເຄາະຮ້າຍຈາກໄພພິບັດໃຫ້ທ່ວງທັນ.

8. ປັບປຸງປຶ້ມຄູ່ມືກ່ຽວກັບວຽກງານການຄຸ້ມຄອງລະບົບສາງຄືນໃໝ່ເພື່ອໃຫ້ແທດເໝາະກັບສະພາບການຕົວຈິງ ພ້ອມກັນນັ້ນກໍ່ຮັບປະກັນໃຫ້ມີເຄື່ອງແຮສາງ ເພື່ອຮັບປະກັນໃນການຊ່ວຍເຫຼືອເບື້ອງຕົ້ນຢ່າງທັນການໃນເວລາທີ່ເກີດມີໄພພິບັດ.

9. ສ້າງຕັ້ງທີມງານປະຖົມພະຍາບານແລະສ້າງຄວາມເຂັ້ມແຂງໃຫ້ພະນັກງານຜູ້ຮັບຜິດຊອບວຽກງານປະຖົມພະຍາ ບານຂັ້ນແຂວງເປັນຕົ້ນຈະສຸມໃສ່ແຂວງອຸດົມໄຊ, ສະຫວັນນະເຂດ, ແລະຈຳປາສັກ ພ້ອມນັ້ນກໍ່ຝຶກອົບຮົມປະຖົມພະ ຍາບານໃຫ້ແກ່ອາສາສະໝັກຊຸມຊົນ, ອາສາສະໝັກຊາວໜຸ່ມກາແດງ, ຫົວໜ່ວຍທຸລະກິດ,ໂຮງຈັກໂຮງງານແລະອື່ນໆ.

10. ສ້າງຄວາມເຂັ້ມແຂງໃຫ້ພະນັກງານຜູ້ຮັບຜິດຊອບວຽກງານຈັດຫານ້ຳສະອາດແລະສຸຂະພິບານບານຂັ້ນແຂວງ ໂດຍເລີ່ມຈາກແຂວງອຸດົມໄຊ, ຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ, ຝຶກອົບຮົບໃຫ້ແກ່ພະນັກງານຂັ້ນບ້ານ, ຂັ້ນເມືອງ.

11. ສ້າງຕັ້ງຄະນະຮັບຜິດຊອບແລະຂະຫຍາຍໜ່ວຍລົດຊ່ວຍເຫຼືອອຸບັດຕິເຫດທາງຖະໜົນລົງສູ່ແຂວງຕ່າງໆເປັນຕົ້ນແມ່ນແຂວງອຸດົມໄຊ, ຫຼວງພະບາງ, ສະຫວັນນະເຂດ, ຈຳປາສັກພ້ອມກັນນັ້ນກໍ່ຝຶກອົບຮົມໃຫ້ແກ່ພະນັກງານ-ອາສາສະໝັກໃນກຸ່ມເປົ້າໝາຍເພື່ອປະຕິບັດວຽກງານດັ່ງກ່າວ.

12. ເຮັດໃຫ້ພື້ນຖານທາງດ້ານໂຄສະນາ ແລະ ຂົນຂວາຍການກຸສົນ ຂອງອົງການກາແດງລາວ ມີຄວາມເຂັ້ມແຂງ, ເປັນມືອາຊີບ ແລະ ກ້າວໜ້າທັນສະໄໝ, ເຮັດໃຫ້ບາງຂະແໜງການທີ່ເປັນທ່າແຮງສາມາດເປັນເຈົ້າການຄົ້ນຄວ້າ-ດັດປັບ ນຳໃຊ້ ແລະ ປະດິດສ້າງວິທະຍາການໃໝ່ເພື່ອຍູ້ໜູນໃຫ້ແກ່ການເຄື່ອນ ໄຫວວຽກງານມະນຸດສະທຳອົງການກາແດງລາວ.

13. ສູ້ຊົນເຮັດໃຫ້ທຸກພາກສ່ວນໃນສັງຄົມທັງພາຍໃນ ແລະ ຕ່າງປະເທດໄດ້ປະກອບສ່ວນທາງດ້ານເຫື່ອແຮງ, ຈິດໃຈ ແລະ ກຳລັງຊັບວັດຖຸຕ່າງໆ ເຂົ້າໃນການເຄື່ອນໄຫວວຽກງານມະນຸດສະທຳ ຮ່ວມກັບອົງການກາແດງລາວ ໃຫ້ນັບມື້ກວ້າງ ຂວາງ.

14. ສູ້ຊົນສ້າງ ແລະ ຂະຫຍາຍເຄືອຂ່າຍວຽກງານອາສາສະໝັກໃຫ້ມີການແຜ່ຂະຫຍາຍ ແລະ ເຂົ້າເຖິງໄດ້ທຸກເພດໄວ, ທຸກຊົນຊັ້ນ, ນັກສຶກສາປັນຍາຊົນ ແລະ ຜູ້ຊົງຄຸນວຸທິ ໃນທຸກພາກສ່ວນຂອງກຸ່ມເປົ້າໝາຍຢ່າງທົ່ວເຖິງແຕ່ຂັ້ນຢູ່ສູນກາງຮອດຂັ້ນທ້ອງຖິ່ນ ເພື່ອໃຫ້ເຂົາເຈົ້າໄດ້ມີສ່ວນຮ່ວມ ແລະ ປະກອບສ່ວນການເຄື່ອນໄຫວຮ່ວມກັບອົງການກາແດງລາວ, ເລືອກເຟັ້ນເອົາຜູ້ທີ່ຈະມາຮັບຜິດຊອບວຽກງານອາສາສະໝັກຕ້ອງໃຫ້ມີມາດຕະຖານຄົບຖ້ວນເຊັ່ນ: ມີຄວາມໜັກແໜ້ນທາງດ້ານການເມືອງ, ຄຸນສົມບັດດີ, ມີພອນສະຫວັນ, ມີວິຊາສະເພາະທີ່ໄກ້ຄຽງກັບວຽກງານທີ່ຮັບຜິດຊອບ ແລະ ສຸຂະພາບດີ ພ້ອມກັນນັ້ນກໍ່ຍົກສູງລະດັບຄວາມຮູ້, ຄວາມສາມາດ ດ້ວຍການເຂົ້າຝຶກອົບຮົມວຽກງານຄຸ້ມຄອງອາສາສະໝັກ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.

15. ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານເລືອດໃນທົ່ວປະເທດທາງດ້ານປະລິມານແລະຄຸນນະພາບໂດຍປະສານງານຢ່າງກວ້າງຂວາງກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງແນໃສ່ເປັນເຈົ້າການໃນການປຸກລະດົມ ຂົນຂວາຍແລະຮັກສາຜູ້ບໍລິຈາກເລືອດແບບສະໝັກໃຈບໍ່ຮຽກຮ້ອງສິ່ງຕອບແທນຢ່າງພຽງພໍຈາກກຸ່ມຜູ້ບໍລິຈາກເລືອດທີ່ມີຄວາມສ່ຽງຕ່ຳ ແນໃສ່ໃຫ້ມີເລືອດທີ່ປອດໄພຕອບສະໜອງຢ່າງທັນເວລາ.

16. ບັນລຸການຮັບບໍລິຈາກເລືອດແບບສະໝັກໃຈບໍ່ຮຽກຮ້ອງສິ່ງຕອບແທນໃຫ້ໄດ້100%.

17. ບັນລຸການເຈາະເກັບເລືອດຈາກຜູ້ບໍລິຈາກແບບສະໝັກໃຈບໍ່ຮຽກຮ້ອງສິ່ງຕອບແທນໃຫ້ໄດ້ຢ່າງໜ້ອຍ 1% ຂອງຈຳນວນປະຊາກອນໃນປະເທດ ຕໍ່ປີ (ຢ່າງໜ້ອຍ 60,000 ຖົງ ຕໍ່ປີ).

18. ເລືອດທຸກໆຖົງໄດ້ຜ່ານການກວດວິເຄາະຢ່າງເປັນລະບົບ.

19. ສົ່ງເສີມການນຳໃຊ້ເລືອດແລະສ່ວນປະກອບຂອງເລືອດຢ່າງຖືກຕ້ອງເໝາະສົມ ໃຫ້ໄດ້ຫຼາຍກວ່າ 50%.

20. ສ້າງລະບົບການຄຸ້ມຄອງການບໍລິການເລືອດທີ່ເຊື່ອມສານກັນລະຫວ່າງສູນເລືອດຂັ້ນຕ່າງໆໃນທົ່ວປະເທດ.

21. ຕອບສະໜອງເລືອດທີ່ພຽງພໍແລະປອດໄພ ໃຫ້ແກ່ຄົນເຈັບ ທີ່ຕ້ອງການເລືອດ ຕາມໂຮງພະຍາບານຕ່າງໆ ແນໃສ່ປະກອບສ່ວນເຂົ້າໃນການບັນລຸ ເປົ້າໝາຍແຜນຍຸດທະສາດດ້ານສາທາລະນະສຸກ (ຫຼຸດຜ່ອນອັດຕາການຕາຍຂອງເດັກ, ຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເພີ່ມອາຍຸຍືນສະເລ່ຍໃຫ້ສູງຂຶ້ນ).

22. ລະບົບຄຸ້ມຄອງຄຸນນະພາບ ໃນການບໍລິການເລືອດ ຖືກຈັດຕັ້ງປະຕິບັດ.

23. ສ້າງສູນເລືອດແຫ່ງຊາດໃຫ້ເປັນສູນເລືອດທີ່ເຂັ້ມແຂງ ແລະເຄື່ອນໄຫວໄດ້ດີ ທາງດ້ານວິຊາການ, ສາມາດເປັນໃຈກາງ ໃນການປະສານງານດ້ານວຽກງານເລືອດ.

24. ສ້າງສູນເລືອດເຂດຢູ່ 3 ແຂວງ (ຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ) ໃຫ້ເປັນສູນເລືອດ ທີ່ມີຄວາມເຂັ້ມແຂງ ສາມາດຊ່ວຍເຫຼືອ ບັນດາສູນເລືອດແຂວງທີ່ໃກ້ຄຽງ.

25. ສ້າງສູນເລືອດຂັ້ນແຂວງ ໃຫ້ມີຄວາມພ້ອມທາງດ້ານການບໍລິການ ແນໃສ່ຮັບປະກັນຕອບສະໜອງເລືອດທີ່ພຽງພໍແລະປອດໄພ ພາຍໃນແຂວງຂອງຕົນ ແລະສົ່ງຕໍ່ໃຫ້ບັນດາແຂວງອື່ນໆ.

26. ຂະຫຍາຍຕາໜ່າງໜ່ວຍເກັບຮັກສາເລືອດຂັ້ນເມືອງຫຼືຂັ້ນໂຮງໝໍໃຫຍ່ໃຫ້ໄດ້ຕື່ມອີກປະມານ30ເປົ້າໝາຍ.

## ພາກທີIII
## ມາດຕະການໃນການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ສຳເລັດບັນດາທິດທາງລວມແລະຄາດໝາຍສູ້ຊົນໃນແຜນຍຸດທະສາດ ໄລຍະແຕ່ປີ 2016-2025 ນັ້ນຮຽກຮ້ອງໃຫ້ບັນດາຂະແໜງການຢູ່ສູນກາງແລະທ້ອງຖິ່ນຕ້ອງໄດ້ເພີ່ມທະວີຄວາມເປັນເຈົ້າການໃນການປະຕິບັດມາດຕະການຄືດັ່ງລຸ່ມນີ້:

1. ອົງການກາແດງລາວແລະອົງການກາແດງແຂວງ,ນະຄອນຫຼວງສືບຕໍ່ອອກແຮງຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກເຂົ້າສູ່ວຽກງານຕົວຈິງແລະສ້າງຂະບວນການແຂ່ງຂັນຮັກຊາດພັດທະນາເວົ້າລວມເວົ້າສະເພາະການຈັດຕັ້ງປະຕິບັດວຽກງານກາແດງລາວໃຫ້ມີຄວາມເຂັ້ມແຂງຮອບດ້ານ.

2. ຕັ້ງໜ້າໂຄສະນາເຜີຍແຜ່ແຜນຍຸດທະສາດ 2016-2025 ໃຫ້ພະນັກງານ-ລັດຖະກອນທົ່ວຂະແໜງກາແດງລາວໃຫ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງແລະສາມາດນໍາໄປຈັດຕັ້ງປະຕິບັດໃຫ້ເກີດຜົນຕົວຈິງຕາມມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກວາງອອກ.

3. ສ້າງເງື່ອນໄຂອໍານວຍຄວາມສະດວກໃນການພັດທະນາວຽກງານກາແດງໃຫ້ໄປຕາມແຜນການທີ່ໄດ້ກໍານົດໄວ້ບົນພື້ນຖານໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ດ້ອຍໂອກາດໃຫ້ໄດ້ຮັບການແກ້ໄຂດີຂຶ້ນ.

4. ອອກແຮງຍາດແຍ່ງໃນການຂົນຂວາຍຊອກຫາແຫຼ່ງທຶນເພື່ອການພັດທະນາວຽກງານກາແດງໃຫ້ຫຼາຍຂຶ້ນນັບທັງທຶນພາຍໃນແລະທຶນຕ່າງປະເທດ.

5. ເອົາໃຈໃສ່ກວດກາ,ຕິດຕາມຄືນປະສິດທິຜົນຂອງບັນດາໂຄງການທີ່ໄດ້ຈັດຕັ້ງປະຕິບັດໄປແລ້ວຫຼືກໍາລັງປະຕິບັດຢູ່ໂດຍສະເພາະບັນດາມາດຕະການ, ຫຼັກການໃນການກວດກາ, ການຕິດຕາມແລະ ການປະເມີນຜົນໂຄງການ.

6. ເພີ່ມທະວີໃນການຄຸ້ມຄອງໂຄງການໃຫ້ໄປຕາມລະບຽບຫຼັກການກໍາຄືກົດໝາຍໃນການລົງທຶນຕ່າງໆ,ສ້າງລະບົບຕິດຕາມແລະການປະເມີນຜົນໃຫ້ເປັນລະບົບ,ທຸກການຈັດຕັ້ງປະຕິບັດໂຄງການແມ່ນໃຫ້ຫຼີກເວັ້ນບັນດາໂຄງການທີ່ບໍ່ຢູ່ໃນເປົ້າໝາຍ.

7. ເພີ່ມທະວີການພົວພັນຮ່ວມມືກັບສະຫະພັນກາແດງແລະຊີກວົງເດືອນແດງສາກົນ, ຄະນະກໍາມະການກາແດງກາແດງສາກົນແລະບັນດາກາແດງນາໆຊາດເພື່ອຂໍການສະໜັບສະໜູນທຶນບົນພື້ນຖານການຊ່ວຍເຫຼືອດ້ານມະນຸດສະທໍາ.

8. ປັບປຸງການປະສານງານລະຫວ່າງສູນກາງແລະທ້ອງຖິ່ນໃຫ້ໄປຕາມລະບຽບການຕາມທິດທາງສາມສ້າງຊຶ່ງສູນກາງປະຕິບັດບົດບາດໃນການຄຸ້ມຄອງມະຫາພາກແລະທ້ອງຖິ່ນເຮັດບົດບາດໃນການຈັດຕັ້ງປະຕິບັດ.

9. ອົງການກາແດງລາວ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ນໍາສະເໜີລັດຖະບານ ເພື່ອຂໍອະນຸມັດຮັບຮອງແຜນຍຸດທະສາດເລືອດ.

10. ກະຊວງແຜນການແລະການລົງທຶນໃຫ້ຄວາມຮ່ວມມືໃນການອະນຸມັດແຜນການ, ກະຊວງການເງິນເປັນເຈົ້າການອະນຸມັດງົບປະມານຢ່າງພຽງພໍ, ຖືເປັນແຫຼ່ງທຶນຕົ້ນຕໍ, ໂດຍອອກລະຫັດງົບປະມານເປັນຂອງວຽກງານເລືອດສະເພາະ ໂດຍຖືກຮັບຮອງເປັນງົບປະມານແຫ່ງລັດປະຈໍາປີຜ່ານສະພາແຫ່ງຊາດ, ສໍາລັບການປະກອບສ່ວນຂອງພາກສ່ວນອື່ນໆເປັນຕົ້ນ: ການສະໜັບສະໜູນຂອງພາກສ່ວນເອກະຊົນ, ອົງການຈັດຕັ້ງພາຍໃນ ແລະ ສາກົນຈະເປັນຮູບການ ການຊ່ວຍເຫລືອລ້າກໍຕາມ ຖືວ່າເປັນທຶນສໍາຮອງສໍາລັບພັດທະນາກິດຈະກໍາສະເພາະກິດໃດໜຶ່ງຂອງວຽກງານເລືອດ.

11. ຕັ້ງໜ້າສຶກສາອົບຮົມແນວຄິດການເມືອງໃຫ້ພະນັກງານລັດຖະກອນກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດເອົາໃຈໃສ່ປະຕິບັດກົດໝາຍແລະລະບຽບການຕ່າງໆ, ສ້າງແນວຄິດໂປ່ງໃສ,ເຊື່ອມຊຶມ,ກຳແໜ້ນແລະຍົກສູງສະຕິເຄົາລົບລະບຽບກົດໝາຍຢ່າງເຂັ້ມງວດ.

ປະທານອົງການກາແດງລາວ.

ເລົາລີ ໄພເພັງຢົວ